ທຸມພັນ ຣັດຕະນະວົງ

# ອ່ານໜັງສືຫຼວງພະບາງ



ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ສະຖາບັນຄົ້ນຄວ້າວັດທະນະທຳ
ພະແນກຖະແຫຼງຂ່າວວັດທະນະທຳ ແຂວງ ຫຼວງພະບາງ

1998

ທຸມພັນ ຣັດຕະນະວົງ

# ອ່ານໜັງສືຫຼວງພະບາງ



ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ສະຖາບັນຄົ້ນຄວ້າວັດທະນະທຳ
ພະແນກຖະແຫຼງຂ່າວວັດທະນະທຳ ແຂວງ ຫຼວງພະບາງ

1998

❀ ຮູບໜ້າປົກ: ບ່າວສາວລິ້ງຂ່ວງຄົບງັນ ໃນໂອກາດປີໃຫມ່ທີ່ເດີ່ນວັດຊຽງທອງ ປີ 1919.
ພິມຄັ້ງທີໜຶ່ງ ຈຳນວນ 1.000 ຫົວ.
ທະບຽນເລກທີ່: 30/ພທປ 210798.

*ເຫື່ອແຮງແລະສະຕິປັນຍາ ທີ່ຂ້າພະເຈົ້າໄດ້ຖອກເທລົງໄປ ເພື່ອເກັບກຳຂໍ້ມູນຕ່າງໆເຫລົ່ານີ້ ດ້ວຍຄວາມຍາກລຳບາກ ຈິນໄດ້ຮັບການຈັດພິມອອກມາສູ່ສາຍຕາ ຂອງບັນດາທ່ານນີ້*

*ຂ້າພະເຈົ້າ ຂໍອຸທິດໃຫ້ເປັນຂອງຂວັນແກ່ຊາວຫລວງພະບາງຜູ້ເປັນເຈົ້າຂອງທີ່ແທ້ຈິງ.*

## ຄວາມຂອບໃຈ

ຂໍຂອບໃຈນຳບັນດາທ່ານຜູ້ໃຫ້ການປະກອບສ່ວນໃນປື້ມຫົວນີ້ : ທ່ານອາຈານ ມະຫາພຸລາ ບ້ານຫມື່ນນາ ນີ້ລາງລຸງພຸມມີ ບ້ານວັດທາດ ລູງຄຳຫລາ ບ້ານໃຫມ່ ນະຄອນຫລວງພະບາງ.

ປ້າພົວ (1) , ປ້າຫມັ້ນ ປ້າແພງສີ ປ້າກອງ ແລະປ້າພົວ (2) ຊຽງ ບຸນທັນ ເມືອງຊຽງເງິນ.

ລຸງຊຽງພັນ ປ້າກັນທາ ບ້ານນ້ຳງາ ເມືອງນ້ຳບາກ.

ຊຽງສີລາ ອາແກວ ເມືອງນານ.

ຂໍຂອບໃຈນຳບັນດາອົງການຈັດຕັ້ງ ແລະ ບັນດາທ່ານຜູ້ໃຫ້ ການ ຮ່ວມມື: ທ່ານ ຄຳຫລາ ທ່ານ ຄຳຕາ ລໍວັນອິນ ທ່ານບຸນຄົງ ຄູດແກວ ທ່ານນາງ ຈັນສີ ທຳມະວົງ ພະແນກຖະແຫລງຂ່າວ ແລະວັດທະນະທຳ ແຂວງຫລວງພະບາງ.

ທ່ານ ບົວ ປະທຸມມະລັງສີ ຫົວໜ້າຫ້ອງການວັດທະນະທຳ ເມືອງນານ ຂໍອຸດທິດແດ່ນີ້ລາງປູ່ມອນ (1947) ທີ່ໄດ້ໃຫ້ເນື້ອນາກສະຖຽງ ໄວ້ກັບ ຄວາມຈຳຂອງຂ້າພະເຈົ້າ.

ອຸດທິດແດ່ນີ້ລາງພແມ່ ແລະ ຊາວບ້ານປາກບາກ ເມືອງຊຽງເງິນທີ່ໄດ້ ເສບງັນອ່ານໜັງສືໃຫ້ຂ້າພະເຈົ້າເຄີຍຊິນ ແລະ ຊາບຊຶ້ງມັນມາແຕ່ເວ ລາຍັງນ້ອຍ.

ຂໍຂອບໃຈນຳທ່ານ ເຈົ້າແຂວງຫລວງພະບາງ ແລະ ພະແນກຖະ ແຫລງຂ່າວແລະວັດທະນະທຳ ແຂວງຫລວງພະບາງ ທີ່ໄດ້ໃຫ້ການ ສະ ໜັບສະໜູນ ແລະ ສົ່ງເສີມໃຫ້ມີການຄົ້ນຄວ້າຮຽບຮຽງ ແລະ ພິມນີ້ລະ ດົກການອັບທຸມ ອ່ານໜັງສືນີ້ອອກມາໄວ້ຄູ່ບ້ານ ຄູ່ເມືອງດ້ວຍ.

**ຄຳເຫັນຂອງທ່ານ ຈັນສີ ໂພສີຄຳ**
**ເຈົ້າແຂວງຫລວງພະບາງ ຕໍ່ກັບການຈັດພິມປື້ມ**
**ຂັບທຸ້ມ ແລະ ອ່ານຫນັງສື ແຂວງຫລວງພະບາງ**



ຂ້າພະເຈົ້າໃນນາມອຳນາດການປົກຄອງແຂວງຫລວງພະບາງ ແລະ ໃນນາມສ່ວນຕົວ ມີຄວາມປິຕິຍິນດີທີ່ເຫັນວ່າ: ປື້ມຂັບທຸ້ມ ແລະ ອ່ານຫນັງສືຫລວງພະບາງສະບັບນີ້ເຊິ່ງທາງພະແນກຖະແຫລງຂ່າວ ແລະ ວັດທະນະທຳຮ່ວມກັບສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ໄດ້ຈັດພິມອອກ ເພື່ອເປັນການອານຸລັກ ຮັກສາມໍລະດົກທາງດ້ານວັດທະນະທຳ ໃຫ້ຄົງຢູ່ຄູ່ລາວກໍ່ຄືຊາວຫລວງພະບາງ ສືບຕໍ່ໄປ.

ຂັບທຸ້ມ ອ່ານຫນັງສືຫລວງພະບາງ ແມ່ນວັນນະຄະດີພື້ນເມືອງ ທີ່ມີມາແຕ່ເດີກດຳບັນ ເປັນພື້ນຖານວັດທະນະທຳອັນດີງາມຂອງຊາວຫລວງພະບາງ.

ປື້ມຂັບທຸ້ມ ແລະ ອ່ານຫນັງສືຫລວງພະບາງໄດ້ຮັບການຈັດພິມອອກສູ່ສາຍຕາຂອງຜູ້ອ່ານໃນເທື່ອນີ້ເປັນຜົນງານອັນດີເດັ່ນຂອງທ່ານ ທຸມພັນ ລັດຕະນະວົງ ຫົວຫນ້າສະຖາບັນຄົ້ນຄ້ວາວິທະຍາສາດສັງຄົມ ພ້ອມກັບເພື່ອນຮ່ວມງານ ແລະ ພະແນກ ຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ພ້ອມກັນເກັບກຳຂໍ້ມູນ ຄົ້ນຄ້ວາຮຽບຮຽງຈາກຄັງສາງຂອງວັນນະຄະດີພື້ນເມືອງລາວ ເຊິ່ງແມ່ນບັນພະບູລຸດລາວໃນສະໄຫມກ່ອນໄດ້ປະດິດຄິດແຕ່ງໄວ້ ເປັນສິລະປະວັດທະນະທຳອັນລ້ຳຄ່າ ແລະ ເປັນສິ່ງເອກອ້າງທະນົງໃຈຂອງຊາວລາວທັງຊາດ ທັງເປັນສັນຍາລັກ ແຫ່ງຄວາມເປັນຊາດທີ່ມີອະລິຍະທຳ ແລະ ວັດທະນະທຳອັນດີງາມຊາດຫນຶ່ງ.

ປື້ມເຫລັ້ມນີ້ ເປັນປື້ມວັນນະກຳທີ່ມີຄຸນຄ່າອັນສູງສົ່ງ ແລະ ຈະເປັນຜົນປະໂຫຍດອັນລ້ຳຄ່າໃຫ້ແກ່ນັກຄົ້ນຄ້ວາ ນັກຮຽນຮູ້ ນັກສຶກສາ ປັນຍາຊົນ ແລະ ມະຫາຊົນຜູ້ທີ່ມີຄວາມສົນໃຈຈະສຶກສາຄົ້ນຄ້ວາຮ່ຳຮຽນ. ຂ້າພະເຈົ້າເຊື່ອແນ່ວ່າ: ຄະນະຮັບຜິດຊອບຈັດພິມປື້ມເຫລັ້ມນີ້ ໂດຍພາຍໃຕ້ການຊີ້ນຳຂອງທ່ານຫົວຫນ້າສະຖາບັນຄົ້ນຄ້ວາວິທະຍາສາດສັງຄົມຈະພ້ອມກັນສຸມສະຕິປັນຍາຄົ້ນຄິດຊອກຫາຂໍ້ມູນ ເພື່ອປັບປຸງເນື້ອໃນໃຫ້ເລິກເຊິ່ງແທດຖືກຕົວຈິງທັງຮັກສາເອກະລັກຂອງທ້ອງຖິ່ນໄວ້ໄດ້ສືບຕໍ່ໄປ.

ອີກເທື່ອໜຶ່ງ ຂ້າພະເຈົ້າຮຽກຮ້ອງມາຍັງບັນດາທ່ານພະນັກງານ ທະຫານ ຕຳຫລວດ ເຖົ້າແກ່ ຜູ້ຊົງຄຸນວຸດທິ ນັກຮຽນຮູ້ ນັກສຶກສາ ປັນຍາຊົນ ແລະ ຊັ້ນຄົນຕ່າງໆ ຈົ່ງປະກອບສ່ວນສະໜອງຂໍ້ມູນໃຫ້ແກ່ການຮຽບຮຽງ ແລະ ຈັດພິມປຶ້ມຫົວນີ້ໃຫ້ມີເນື້ອໃນອຸດົມສົມບູນດີຂຶ້ນພ້ອມກັນນັ້ນກໍຊ່ອຍກັນປົກປັກຮັກສາມໍຣະດົກອັນລ້ຳຄ່າຂອງລາວໄວ້ ເພື່ອລູກຫຼານ ຂອງພວກເຮົາສືບຕໍ່ໄປດ້ວຍ.

ຫລວງພະບາງ, ວັນທີ່ 8 ກໍຣະກົດ 1998.
ເຈົ້າແຂວງ ແຂວງຫລວງພະບາງ

# ຄຳນຳ

ເປັນທີ່ຮູ້ກັນໂດຍທົ່ວໄປແລ້ວວ່າ ການຂັບລຳທຳເພງ ແລະ ການດີດ ສີ ຕີ ເປົ່ານັ້ນ ເປັນຂອງປະຈຳທຸກຊາດທຸກພາສາ ຕັ້ງແຕ່ມະນຸດພວກເຮົາເລີ່ມສ້າງສັນ ແລະມີອະຣິຍະທຳຂອງຕົນເອງຂຶ້ນມາ. ຊາດລາວພວກເຮົາກໍເຊັ່ນດຽວກັນ ໄດ້ມີອະຣິຍະທຳອັນເກົ່າແກ່ໃນດິນດອນຕອນນີ້ ແລະ ນອກຂອບເຂດປະເທດລາວເຮົາປັດຈຸບັນນີ້ມາແຕ່ສະໄໝດຶກດຳບັນ ຄື ຢ່າງໜ້ອຍ ເລີ່ມຕັ້ງແຕ່ສະໄໝຫີນສຽມຕູນ ອັນເປັນອະຣິຍະທຳ ທຳອິດຂອງມະນຸດ ໃນແຫຼມສຸວັນນະພູມປະເທດ ( 15-35 ພັນປີກ່ອນໜ້ານີ້ ).

ອັນພິເສດສຳລັບຊາດລາວເຮົາປັດຈຸບັນ ທາງດ້ານການຂັບລຳນັ້ນແມ່ນ ມັນມີຄວາມອຸດົມແລະຫລາກຫລາຍກວ່າທຸກຊາດໃດໆໃນແຫຼມສຸວັນນະພູມປະເທດນີ້ ເພາະທຸກໆ ເຂດແຄວນທຸກໆເຜົ່າມີສຽງຂັບລຳ ແລະ ການດີດສີຕີເປົ່າ ເປັນຂອງຕົນເອງຫລາຍຊາດຫລາຍສີຫລາຍຈັງຫວະ ແລະ ຫລາຍຮູບແບບແຕກຕ່າງກັນຈົນບໍ່ສາມາດຮູ້ຈຳນວນໄດ້ຢ່າງແມ່ນຢຳ

ສະເພາະຊາວຫລວງພະບາງເອງກໍມີຮູບການຂັບຮ້ອງ ແລະດີດສີຕີເປົ່າຫລາກຫລາຍທີ່ເປັນເອກະລັກປະຈຳທ້ອງຖິ່ນ ເຊັ່ນ: ຂັບທຸ້ມ ອ່ານໜັງສື ສະຫລາງ ສາມສາວ ສອງຄອນລອດໄຄ ມາຢ້ອງ ນາກສະດຸງ ( ນາງນາກ ) ຂັບງອມ ຂັບເສືອເຂົ້າເລົ້າ ເຊິ່ງ ເວົ້າຫລິ້ນ... ໂດຍບໍ່ນັບຮູບການເທດສະໜາຂອງວັດ ແລະ ກຸ່ມຂັບລຳຂອງເຜົ່າອື່ນໆທີ່ດຳລົງຢູ່ນອກຕົວນະຄອນຫລວງພະບາງເອງ. ເວົ້າສະເພາະແຕ່ອ່ານໜັງສືນັ້ນ ກໍຍັງມີຫລາຍຮູບຫລາຍແບບ ແລະ ສີສັນສະເພາະຂອງບ້ານຂອງທ້ອງຖິ່ນຍ່ອຍພໍໃຜພໍມັນ ເຊັ່ນ : ແບບອ່ານຂອງໄທເມືອງຫລວງພະບາງເອງ ແບບລ່ອງຂອງທາງເໜືອ ແບບລ່ອງຂູ ແບບລ່ອງຄານ ແບບກອງເມືອງ ແບບເມືອງນານ ແລະ ອື່ນໆ ນອກນັ້ນກໍຍັງມີແບບຜູ້ເຖົ້າແບບຜູ້ໜຸ່ມ ແບບອ່ານໜັງສືຜູກ ແບບສູດຂວັນ ແບບງອມ ແບບເດີນດົງຊົມດອກແລະແບບລ່ອງຂອງດົງນີ້ເປັນຕົ້ນ. ຄວາມແຕກຕ່າງກັນລະຫວ່າງ ບ້ານ ແລະ ທ້ອງຖິ່ນຍ່ອຍຕ່າງໆນັ້ນ ບໍ່ໄກກັນຫລາຍທໍ່ໃດ ພຽງແຕ່ຈະຕ່າງສຳນຽງ ການຫລົ່ນສຽງ ຫລືຈັງຫວະບາງບ່ອນ ທໍ່ນັ້ນ ສ່ວນໃຫຍ່ແລ້ວຈະຄືກັນ. ສ່ວນການອ່ານແບບຜູ້ເຖົ້າ ແບບຜູ້ໜຸ່ມ ແບບກອງເມືອງ ແບບໜັງສືຜູກນັ້ນ ມີຄວາມແຕກຕ່າງກັນພໍປະມານ ອີງຕາມນິໄສໃຈຄໍ ແລະລັກສະນະທ່າທີຂອງໄວ ແລະຮູບແບບຂອງການອ່ານນັ້ນໆ... ພວກເຮົາສາມາດເວົ້າໄດ້ວ່າ ອ່ານໜັງສືແມ່ນ

ຮູບການໜຶ່ງຂອງການລະບາຍຈ່າຍກາບກອນກະວີ ພະຫຍາກະວີ ກະທູ້ກະວີຄວາມຄົມກະວີ ວັນນະກຳກະວີ..., ແລະອື່ນໆ ດວຍສຳນຽງສະເນາະເພາະພິ້ງ ເປັນດົນຕີເໝືອນກັນກັບຂັບ-ລຳ ປະເພດຕາງໆຂອງລາວ.

ຕາມພາສາຫລວງພະບາງ ແລະ ຊາວເໜືອຂອງລາວແລ້ວ ຄຳວ່າອ່ານ ໜັງສືນັ້ນແມ່ນການຈ່າຍຄວາມ ຈ່າຍສຳນວນ ຈາກໜັງສືຫລືຈາກປະຕິພານຄວາມເວົ້າຂອງນັກອ່ານເອງ ເຊິ່ງຜິດກັບຄວາມໝາຍປັດຈຸບັນຈັກໜ່ອຍ. ຄຳວ່າ "ອ່ານ" ໃນພາສາປັດຈຸບັນນັ້ນ ພາສາລາວເດີມຫລວງພະບາງ ແລະ ພາກເໜືອເຮັຽກວ່າ "ລ່າຍ" ຄືເອົາປຶ້ມມາລາຍໄປຕາມຕົວອັກສອນນັ້ນ.

ມັນໄດ້ກຳເນີດເກີດຂຶ້ນມາແຕ່ເມື່ອໃດຍາມໃດ ເລື່ອງນີ້ສຸດວິໄສທີ່ພວກເຮົາຈະຮູ້ໄດ້ຢ່າງແມ່ນຢຳ. ແຕ່ຕ້ອງຮູ້ໄວ້ວ່າສຽງຂັບລຳນັ້ນເປັນຂອງປະຈຳຊາດ ມັນກຳເນີດ ເກີດຂຶ້ນໃນຂະບວນວິວັດແຫ່ງການດຳລົງຊີວິດໃນສັງຄົມອັນແນ່ນອນແລະຍາວໄກ. ການດຳລົງຊີວິດເປັນສັງຄົມຂອງຊາວຫລວງພະບາງຮ່ວມກັບຜູ້ເຜົ່າພັນອື່ນ ເປັນຕົ້ນແມ່ນຕະກຸນ ມອນ-ຂະແມເຊິ່ງເພິ່ນເຮັຽກວ່າຂອມບູຮານນັ້ນ ມີມາຕັ້ງແຕ່ຢ່າງນ້ອຍຄິດຕະສະຕະວັດທີ່ V ຕາມຕຳນານ ທີ່ໄດ້ບອກໄວ້. ມັນເປັນໄປໄດ້ວ່າແຕ່ກ່ອນສຽງຂັບລຳທອງຖິ່ນໜຶ່ງນັ້ນອາດມີການພັດທະນາຂະຫຍາຍຕົວ ໂດຍປັບປຸງມັນເອງໃຫ້ສອດຄ່ອງກັບກາລະເທສະ ກໍຄືລົດນິຍົມຂອງສັງຄົມແຕ່ລະຍຸກ. ແຕ່ແນວໃດກໍດີພວກເຮົາກໍຄວນຮັບຮູ້ອີກຢ່າງໜຶ່ງວ່າ ສຽງຂັບລຳທອງຖິ່ນນັ້ນແມ່ນສິ່ງທີ່ກັ່ນຕອງສັງເຄາະ ແລະ ທົດສອບມາໃນທ່າມກາງກຸ່ມນຳໃຊ້ເປັນ ປະຈຳວັນຂອງສັງຄົມມາຢ່າງເຫິງນານ ເພາະສະນັ້ນຈຶ່ງສາມາດເວົ້າໄດ້ວ່າ ມັນບໍ່ແມ່ນຂອງ ຊົ່ວຄັ້ງຊົ່ວຄາວເລີຍ ແຕ່ແມ່ນຂອງຊົ່ວຍຸກຊົ່ວກັບ ເຊິ່ງບໍ່ຮອນຈະປ່ຽນແປງແລະຕາຍໄປໄດ້ງ່າຍໆ.

ສິ່ງທີ່ແນ່ນອນອີກອັນໜຶ່ງທີ່ພວກເຮົາຄວນຈະຈົດຈຳໄວ້ ນັ້ນກໍຄືສຽງອ່ານໜັງສື ກໍດີ ສຽງຂັບທຸ້ມ ສະຫລາງ ສາມສາວ ກໍດີຂອງຊາວຫລວງພະບາງນັ້ນ ມັນແມ່ນຜະລິດຕະພັນອັນຍອດຍິ່ງຂອງສັງຄົມນະສະຖານທີ່ນັ້ນ ເຊິ່ງປະກອບດ້ວຍກຸ່ມຊົນລາວແຊກຕ່າງໆ ຫລືພວກຕ່າງໆເຊັ່ນ ລາວດັ້ງເດີມ ລື້ ຍວນ ໄທດຳ ຂອມ ອັນເປັນເຜົ່າດັ້ງເດີມປະສົມກັນກາຍມາເປັນຊາວຫລວງພະບາງນັ້ນເອງ ແລະ ກໍດ້ວຍເຫດນີ້ເອງທີ່ພວກເຮົາຈຶ່ງເຫັນວ່າບໍ່ວ່າ ທຸກແຊກຕະກຸນເຜົ່າໃດໆທີ່ປະກອບເປັນຊາວຫລວງພະບາງ ກໍລ້ວນແລ້ວແຕ່ອ່ານໜັງສືຂັບທຸ້ມຖືວ່າເປັນສົມບັດເຂົາເຈົ້າເອງ.

ຈັກກະວານຂອງການອ່ານໜັງສ:

ການອ່ານໜັງສືຂອງຊາວຫລວງພະບາງນັ້ນ ແມ່ນຈັກກະວານອັນໄພສານຢ່າງບໍ່ມີສ້ຽງສຸດເປັນອັນໜຶ່ງ. ມັນແມ່ນການໃຊ້ສຳນວນຄຳເວົ້າແລະປະຕິພານກະວີຢ່າງເລິກເຊິ່ງ ກວ້າງຂວາງ ແລະບໍ່ຮູ້ຈັກບົກແຫ້ງເປັນ ມັນຍັງແມ່ນການທົດສອບຄວາມຮູ້ຄວາມມີປະຕິພານໃນທຸກຂົງເຂດວິຊາ ເຊັ່ນສຳນວນພາສາ ພູມມີປະເທດ ປະຫວັດສາດ ສິລະປະ ວັດທະນະທຳ ວັນນະກຳ ປັດຊະຍາທຳມະ ຈັນຍາທຳ ຮີດຄອງປະເພນີ ຈົນກະທັ້ງ ວິທະຍາສາດ ແລະການເມືອງນຳດ້ວຍ.

ຊາວຫລວງພະບາງຈະອ່ານໜັງສືໃນກໍລະນີແຕກຕ່າງກັນດັ່ງນີ້: ເວລາຄົບງັນ ຕາມບຸນວັດບຸນບ້ານ ຝ່າຍສາວຈະນັ່ງເປັນແຖວກັນ ຈີບຄຳໝາກພູພັນບູລີ ຫລືແກະໝາກແຕງ ສຳລັບໝີບເອົານ້ຳມັນເພື່ອໄຫລເຮືອໄຟ ຫລືຖັກຄ່າຍດອກຕ່າງໆເອ ເຮືອນຜາ.... ຝ່າຍຊາຍກໍ່ຈະເອົາເສບເຂົ້າຊຸມມານັ່ງລຽນກັນເຊິ່ງໆໜ້າຜູ້ສາວ ແລ້ວກໍ່ຈະອ່ານໜັງສື ຫລືຂັບທຸ້ມຖອງກັນ ປຸກປອກ ສູ່ກະທູ້ ຈາຍູພະຫຽາຍຫລືກຽວກອນຂໍຄວາມຮັກນຳກັນ ເຂົາເຈົ້າຈະອ່ານເວລາແຫ່ຕົ້ນເຜິ້ງ ຫລືເຮືອນຜາ ເວລາວຽນທຽນ ເວລາເຂົ້າປ່າເລາະດົງ ເວລາລອງເຮືອກັບຈາກໄປຊອກມາຫາກິນ ເວລາງັນເຮືອນດີ ແລະ ອື່ນໆ...

ອັນນັບວ່າເປັນພາຫະນະທີ່ວິເສດຂອງຊື່ສຳພັນ ລະຫວ່າງຄົນຕໍ່ຄົນ ລະຫວ່າງຄົນຕໍ່ສິ່ງຄົນຕະຫລອດຕໍ່ໜ້າທີ່ການງານ ແລະຄອງປະພຶດທີ່ຖືກຕ້ອງຊອບທຳ ມັນຍັງແມ່ນ ພາຫະນະໃນການຊອຍສ້າງຄວາມຮັກແພງ ສາມັກຄີ ຄວາມເມດຕາກະລຸນາຊ່ອຍເຫລືອເຊິ່ງກັນແລະກັນ ສົ່ງເສີມແລະປູກລະດົມໃຫ້ມີນ້ຳໃຈຮັກຊາດແພງເຊື້ອ ຮັກບ້ານເກີດເມືອງນອນ ຮັກຮູ້ຄອງລູກເຕົ້າ ຕໍ່ສູ້ຜ່ານຜ່າອຸປະສັກນາງປະການ ເພື່ອສ້າງຊີວິດອັນສົດໃສ ແລະສຳລຸນຕະຫລອດປະພຶດຕົນໃຫ້ເປັນຄົນດີ ຄົນພັດທະນາສ້າງສາປະເທດຊາດ ແລະ ສັງຄົມລາວດ້ວຍ. ເມື່ອທ່ານທຸກໄດ້ອ່ານ ແລະພິນິດພິເຄາະຢ່າງຖີ່ຖ້ວນໃນປຶ້ມທ້ອນແລ້ວ ທ່ານຈະໄດ້ພົບ ສົມບັດອັນລ້ຳຄ່າ ແລະຫາໄດ້ຍ້າຍດາຍອີກເບື້ອງໜຶ່ງໃນມະຫາສະໝຸດແຫ່ງຄວາມອຸດົມທາງສິລະປະ ວັດທະນະທຳ ຂອງຊາດລາວເຮົາ ບັນດາເຜົ່າ.

ໃນບົດຄວາມຂອງສະດູດັດທີ່ໄດ້ລົງພິມໃນວາລະສານ "ຝຣັ່ງ-ອາຊີ" ເຈົ້າ ສຸວັນນະພູມມາ ໄດ້ໃຫ້ຂໍ້ສັງເກດໄວ້ວ່າ :

" ສຽງຂັບລຳອ່ານໜັງສືນັ້ນ ນັບວ່າເປັນເພື່ອນ ຂອງຄວາມຊຸ່ມບານ. ຊາວລາວມີ

ຄວາມດູດດື່ມອິ່ມຫລີນຳສຽງຂັບສຽງເສບ... ຊາດຂອງພວກເຮົາໄດ້ສະແດງອອກ ໃນສຽງ ຮ້ອງຫຼິ້ນຮ້ອງເສບຂອງເຂົາ ເຖິງຄວາມລື່ນເລີງໄດ້ຍທຳມະຊາດ ຄວາມພູມໃຈ ໃນຊີວິດ ຄວາມຮູ້ສຶກຮັກ ແລະ ຄວາມກະຕຸ້ນໃຈຢ່າງບໍ່ສຽງສຸດເປັນຂອງຜູ້ທີ່ມີຄວາມຮັກ ແລະ ຄວາມໂສກ "

ທ່ານ ເລີແຟວ ຟີງຕາລິດ ທີ່ໄດ້ມາເຖິງຫລວງພະບາງ ໃນຊຸມປີ 1890 ໄດ້ບັນທຶກ ຄວາມຮູ້ສຶກຂອງທ່ານເປັນອະນຸສອນໄວ້ວ່າ :

" ອະນຸສອນຂອງຫລວງພະບາງນັ້ນ ສຳລັບຂ້ອຍແລ້ວບໍ່ສາມາດແຍກອອກໄດ້ຈາກກິ່ນ ຫອມຫວນອັນອ່ອນໜຸ່ມຂອງດອກຫມາກ ດອກຊ່ອນ ແລະ ດອກຈຳປາ ໃນຍາມ ຕອນກາງ ຄືນທີ່ສຸດສວຍ ຫນັກຈິ້ມ ແຕ່ທ້ອງຟ້າເມືອງລາວ ເຕັມແຕ່ດາວລະດາດຟ້າ ເຊິ່ງຢູ່ຕາມ ຖະ ຫນົນທີ່ປົກຮົ່ມດ້ວຍຕົ້ນຕານ ແລະ ຕົ້ນພ້າວທີ່ປູກລຽນລາຍກັນໄປຕາມຮົ້ວຂອງສວນ ຫມາກ ກຽງ ແລະຫມາກຕູມ ນັ້ນກໍມີຝູງຄູ່ຮັກບ່າວສາວພາກັນຍ່າງອ່ານໜັງສືຖອງ ແລະ ກຽວພາ ລາສີກັນດ້ວຍຄວາມຊື່ນຊົມ "

ຂ້າພະເຈົ້າໄດ້ພະຍາຍາມໃຊ້ເວລາຫວ່າງເລີ່ມ ແຕ່ປີ 1990 ເພື່ອການ ຮັບໂຮມ ເອົາການອ່ານໜັງສືຂອງຊາວພລວງພະບາງຊຶ່ງນັບມາພິມ ນັບວ່າເປັນບາດລິເລີ່ມ ການຂຸດ ຄົ້ນການອ່ານໜັງສື ກໍຄືຂັບລຳຂອງຊາດລາວທ້ອງຖິ່ນ ແລະ ເຜົ່າຕ່າງໆທີ່ມີລັກສະນະແຫ່ງ ຄວາມອຸດົມສົມບູນນັ້ນ ຍັງບໍ່ທັນໄດ້ຖືກຮັບໂຮມ ເພື່ອປົກປັກຮັກສາ ແລະ ເຜີຍແຜ່ ໃຫ້ມວນ ຊົນຊາວລາວ ແລະ ຊາວໂລກໄດ້ຮູ້ໄດ້ຊົມເຕັມເມັດເຕັມຫນ່ວຍເທື່ອ.

ໂອກາດນີ້ຂ້າພະເຈົ້າຫວັງວ່າ ດ້ວຍສະຕິສຳປະຊັນຍະຂອງຄົນລາວທີ່ມີມູນເຊື້ອ ນັກ ປວດຮຽນຂຽນອ່ານ ເປັນຊີວິດຈິດໃຈ ຈະໄດ້ຊ່ວຍກັນປົກປັກຮັກສາ ສືບທອດ ແລະເຜີຍແຜ່ ມໍລະດົກອັນລ້ຳຄ່າຂອງລາວເຮົາທາງດ້ານນີ້ ໃຫ້ສັງຄົມລາວກໍຄືຊາວໂລກໄດ້ຮູ້ນຳດ້ວຍ.

ວຽງຈັນ, ວັນທີ່ 27 / 5 / 1998.

ທຸມພັນ ຣັດຕະນະວົງ.

# ສາ ລະ ບານ


ພາກ 1.

ອ່ານປ່ຽວ.

ໂດຍປ້າຜິວ ບ້ານຊຽງເງິນ ຫລວງພະບາງ
ປາຫມັ້ນ
ປີ 1991. ໜ້າ 3.

ພາກ 2.

ອ່ານກະທູ້ ຍິງ-ຊາຍ.

ຊຽງບຸນທັນ
ປາຜິວ 60 ກ່ວາປີ ບ້ານຊຽງເງິນ ຫລວງພະບາງ
ປີ 1991. ໜາ 40.

ພາກ 3.

ອ່ານໂຈດກັນ.

ລຸງຊຽງພັນ 60 ປີ
ປາກັນທາ 50 ປີ ບ້ານນ້ຳງາ ຫລວງພະບາງ
ປີ 1990. ໜາ 46.

ພາກ 4.

ອານອວຍພອນ-ສູດຂວັນ.

ຊຽງສີລາ
ນາງແກວ ເມືອງນານ ຫລວງພະບາງ
ໜາ 62.

ພາກ 5.

ອ່ານສູ່ຂວັນດອງ. ໜ້າ 66.

ພາກ 6.

ອ່ານທວາຍ. ລຸງມະຫາພິລາ ບ້ານຫມື່ນນາ ຫລວງພະບາງ
ປີ 1991. ໜາ 72.

<u>ພາກ 7</u>.

ລ່ອງຂອງ.

- ເກັບກຳໂດຍ ນາງ ຈັນສິນ 49 ປີ
- ຜູ້ອ່ານ ລຸງຈານ ທອງພັນ 56 ປີ
- ຜູ້ໃຫ້ເນື້ອນີ້ລາວລຸງພຸມມີ ເຈົ້າຂອງພິມງານ ປະຕິມະກຳ ຫົວນາກ ຂັ້ນໄດວັດທາດ ລ່ວງລັບໄປແລ້ວ ປີ 1984.

ໜາ 75.

<u>ພາກ 8</u>.

ອ່ານດອກ ອັບຫຸ້ມ ສະຫລາງ ສາມສ້າວ ສອງຄອນລອດໄດ້ ອັບງ້ອມ.

- ອາຈານມູມະຫາພິລາ ບ້ານໝື່ນນາ ຫຼວງພະບາງ 1991.
  ແລະ ຜູ້ອື່ນໆ... ໜາ 77.

<u>ພາກ 9</u>.

ນ້າປ່ອງ.

- ລຸງທິດຫລ້າ ບ້ານໃໝ່ ຫລວງພະບາງ
  ປີ 1991.
- ນາກສະດຸ້ງ ( ນາງນາກ )
  ນີ້ລາວປູ່ມອນ ຊຽງເຫລັກ ບານປາກບາກ ຊຽງເງິນ
  ຫຼວງພະບາງ
  ປີ 1947. ໜາ 85.

ອ່ານປ່ຽວ :

ປ້າພິວ 60 ກວ່າປີ.

ຖາມຂ່າວ !

1. ຖາມຂ່າວເຈົ້ານັ້ນຢູ່ແຫ່ງຫ້ອງ ກູ້ຝ່າຍທາງໃດມາ ນັ້ນເດ
ເຈົ້ານັ້ນມີການຫຍັງ ຈຶ່ງດຸງເດີນ ມາພີ້

2. ລື່ວາ ເຈົ້ານັ້ນ ມີການຮ້ອນ ອັນຕຸະລາຍບັງບຽດ ເຈົ້າລີ
ເຈົ້ານັ້ນ ເດືອງພະໄທໜັກ ຈຶ່ງດອນມາທາງພີ້ ?

3. ຫມູ່ເຮົາເຮີຍ ເຮົາຄ່ອຍພາກັນສ້າງ ເມືອງລາວໃຫ້ຫຸ້ເຮືອງຮຸ່ງ
ຢາໄດຢຸດຢອນຢານ ມານຮາຍແຕຢາງໃດ

4. ໂອນໍ ! ຄີນູລາວູມີ ສາມລ້ານ ສາມັກຄີໃຫ້ແໜ້ນໜຸ່ນແກນ ຫມູ່ລາວເອີຍ
ຮັກສາແດນລານຊາງ ປະສົງສາງໃຫຮຸງເຮືອງ

5. ເມືອງຊຽງເງິນ ເປັນທີ່ຕັ້ງ ຫລວງພະບາງເປັນທີ່ໜຶ່ງ ພໍ່ອາວນາ
ວຽງຈັນເປັນເອກອາງ ລາວສາງແຕປະຖົມ

6. ໂອນໍ ! ເຮົາຄ່ອຍພາກັນຫລູ້ນ ສາມັກຄີໃຫ້ແໜ້ນໜູແກ່ນ ທຸກຄົນທ້ອນ
ຫມູ່ເຮົາເອີຍ ຢາໄດນອນຢູລາ ຂະຫຍັນສາງ ໃຫຮຸງເຮືອງ.

ປ້າແພງສີ 50 ກວ່າປີ.

7. ຖາມຂ່າວເຈົ້ານັ້ນ ລູກແຫ່ງຫ້ອງ ກູ້ຝ່າຍທາງໃດມາ ນີ້ເດ
ເຈົ້ານັ້ນ ເດືອງໃຈຫຍັງ ຈຶ່ງດຸງເດີນມາພີ້

8. ລູກຫລານເອີຍ ເຈົ້ານັ້ນ ບຸນສູງແລ້ວ ຈຶ່ງແຂນພວກປ້າແດ່ ນີ້ເດີ
ພວກປານີ້ ຕົກຕ່ຳຕ້ອຍ ຄອຍເຈົ້າຢູແຕໄກ

9. ໄທເຮົາເອີຍ ໃຫ້ຄ່ອຍດັ້ງໄຟໄວ້ ກໍ່ດັ້ງໄຟໃຫ້ເປັນຖານ ກ່ອນມາ
ຫາກວາເປັນຖານແລວ ເຮົາຊິໄດນັ່ງຝີງ

10. ໂອນໍ ! ເປັນສິ່ງດອກຮັກພໍ້     ກູ້ແຕ່ກິ່ນບໍ່ຫັ້ມູຊຸມ ນົ້ມາ
ດອກຮັກເອີຍ ເປັນເກສອນ     ສອນຊິນຳໄປຊອນ

11. ອັ່ນວ່າ ເປັນສິ່ງດອກພູດພໍ້     ກູ້ແຕ່ກິ່ນບໍ່ຫັ້ມຊຸມ ນົ້ມາ
ດອກຮັກເດີຍຫອມເຫລື່ອຫລາຍ     ສອນຈະກາຍໄປເວັ້ນ

12. ໄດ້ວ່າ ລົງຈຸ່ມໜໍ້     ບໍດຳດີ້ຕັງບໍອອກ ອຸ່ນໃຈເຮີຍ
ໄດວ່າ ລົງຈຸ່ມນ້ຳ     ຕົນບໍ້ກວຈິເກືອກເອົາ

13. ໄດ້ວ່າ ໃຈປະສົງຜູ້ລວ     ຜົມບໍຍອູຍ ນ້ອງຈິແບ່ງ ແພງເຮີຍ
ໄດວ່າ ຂາສອດໂສງ     ຕາຍແລວ ກໍຊາງມັນ

14. ຂ້ອຍນົ້ນາ ປຽບດັ່ງແມງກະເບົ້ອ     ບິນປິ່ນເປົ້ອງ
ຈິ່ງບິນແອນແສນສະໜຸກ ຢູ່ນາ     ມາບໍມີຄວາມສຸກ ສິ່ງໃດຊິມາໃຫ້

15. ຂ້ອຍນົ້ ເປັນດັ່ງເຈັຽຕາຍທ້ອຍ     ປາຍຝາແຂວນຢູ່ອຸ່ນໃຈເອີຍ
ຮືດບໍມີທີ່ແຂວນ ແນນບໍມີທີ່ຈັງ     ສະເໜີງວາງຄວາດົງ

16. ມາເຢີ ໃຜຊິມານຳນ້ອງ     ກໍຈອມພູເກັບດອກດູ່ ກໍມາຫ້ອມ
ໃຜຊິຮອຍ ດອກຊອນ     ນຳນອງໃຫຮີບມາ

17. ດອກໜຶ່ງ ບານແຕ່ເຊົ້າ     ຄ້າຍຄ່ຳກໍລົງຫຼາຍ ນົ້ມາ
ດອກໜຶ່ງ ບານເວລາແລງ     ດອກປີ ບານຊອນ

18. ດອກໜຶ່ງ ບານເຫລືອງແຫຼ້     ຊະແລແຊ໊ຢູ່ກອງງ່າ ນົ້ນມາ
ດອກໜຶ່ງ ບານແຕ່ເຊົ້າ     ປະສົງເທົ້າ ຮອດແລງ

19. ໂອນໍ ! ອັ່ນວາດອກພູດຊ້ອນ     ຊ້ອນດອກນາງກາຍ ນົ້ມາ
ພໍບາຍແສງອະໂນໄທ     ກໍຮວງຫອມເຫລືອລົ້ນ

20. ໂອນໍ ! ເຈົ້າມັ້ນໄປລັບໜ້າ     ທາງໃດບໍ່ຮູ້ຕາວ ມາເດ
ນອງມີຄອງຢູ່ຖາ     ບໍມີມຊຸຕາວມາ

21. ນ້ອງນົ້ເອີຍ ເກີດຢູ່ດິນຕອນນັ້ນ     ເປັນແນວໃດເດບໍ່ໄດ້ຢູ່ອຸ່ນໃຈເຮີຍ
ເປັນແຕເວນກອນກໍ     ນຳໄຊຊາດຊິມາຂອຍ ນົ້ມາ

22. ຂ້ອຍຢູນີ້ນາ ພໍ່ຢາກອັດແມ່ນ້ຳ      ໃຫ້ແປວເປົ່ງເມື່ອເໜືອ ພຸ້ນເດ
ຄືນວາການຈຳເປັນ      ເປົງແປວໄປໃຕ

23. ອິດສາເຢຼ ເອົາຂ້ອຍນີ້ຂ້າມຍ່ານນ້ຳ      ໃຫ້ມັ້ນເຂດສາລະນອນ ກ່ອນທ້ອນ
ຫລອນເທື່ອບຸນເຣົາມີ      ຊິບໍ່ໄລລືມເຈົ້າ

ປ້າຫມັ້ນ 40 ກ່ວາປີ

24. ແສນທຸກ ນ້ອງນີ້ດັ່ງປ່າໄມ້      ນ້ອງຊອກໄຕ່ອາໄລຫາ
ແສນທຸກ ນ້ອງນີ້ບຸປ່າຊອດ ລອດປ່າໄມ້      ນຳອາຍຢູ່ສູ່ວັນ

25. ຜູ້ສ່ວນຮວງ ໂອ້ວ່າ ດວງດອກໄມ້      ກົ້ວແຕ່ກິ່ນບໍ່ທັນຈຶມ ນີ້ນາ
ນ້ອງນີ້ນາ ໂອວາ ນຳເມື່ອຈຶມ      ຊ້ຳເລົ້າທາຍໄປຊ້ຳ

26. ລົງເຮືອນເອີຍ ມາພົບນ້ຳບໍ່ແກ້ວ      ນ້ອງຢາກອາບໃຫ້ສົມໃຈ ນີ້ນາ
ຄວາມຮັກໂອວາ ມືງຂຽວ      ຢູ່ໃນກະຖັງແກວ

27. ໂອ້ວ່າ ! ຄຳຫລູອຸກລີ້      ໃຫ້ນ້ອງປວງລະເມີງຫລົງ ນີ້ນາ
ເພິ່ນນັ້ນເອີຍ ໂອວາ ທຳເສີຍຕົວ      ໃຫ້ນ້ອງມົວລະເມົາຍອນ

28. ເພິ່ນນັ້ນເອີຍ ຕົວະໃຫ້ນ້ອງໄປຮູ້ລາະທວຍ      ຊິສາງນກວຍຕາແຫຼວທາງ ນີ້ນາ
ເພິ່ນນັ້ນຕົວະ ໃຫ້ນ້ອງໄປຮາງຊູ      ມາແລວແມນບໍ່ເອົາ

29. ສຸດທີ່ໃຈຜູ້ຊາຍນີ້      ສະເຫມີກວຍຕາແຫຼວທ່າງ ນີ້ນາ
ອັນວາຕົກໃສ່ນ້ຳ      ໄຫລເຂົ້າສູ່ຕາ

30. ອ້າຍເອີຍ ຫຍັງບໍ່ຄິດແຕ່ຄາວກ່ອນກີ້      ກິນຫຍັງມາກໍບໍ່ດແບ່ງ ກັນນາ
ຊີ້ນຕອນພັນມັນຕອນຮ້ອຍນ້ຳອ້ອຍເປັນທໍ່ບີ້      ກໍຍັງຊູ້ສູ່ກັນ

31. ນ້ອງນີ້ນາ ຕັ້ງຕໍ່ອ້າຍ      ສະເຫມີຕໍ່ຕັ້ງຕໍ່ ຢູ່ນາ
ອັນວາຕັ້ງຕໍ່ອາຍ      ພາຍພີ້ຢູ່ຜູ້ດຽວ

32. ອ້າຍນັ້ນ ຖາມຂ່າວນ້ອງ      ນ້ອງກໍ່ຢູ່ສະຫວັດດີລ້ວນ
ບຸນຄຸນເຈົ້າເລື່ອມ ພີ່ຊາຍເອີຍ
ນ້ອງຫາກສຸກຢູ່ລ້ວນ      ບຸນເຈົ້າ ເລື່ອມງວ່ຳ

33. ໂອນໍ ! ເຫັນວ່ານ້ຳຫວຍນ້ອຍ ຢ່າຟ້າວເກື່ອນຊາຍຖິມ ເທື່ອເນີ
ຂໍໃຫ້ພັນພຽນຂຸດ ຫາກຈິເປັນວັງກວາງ

34. ໂອນໍ ! ບຸນຫລາຍຈຶ່ງໄດ້ມາພົບພໍ້ ບຸນພໍຈຶ່ງໄດ້ມາຈວບກັນນໍ
ນ້ອງຮັກສີແຈມເຈົ້າ ປາງນີ້ສອນເພິ່ງບຸນ ນັ້ນມາ

35. ໂອ້ວາ ດວງດອກໄມ້ ຕອງແຕກກິ່ນ ບໍ່ທັນຊົມ
ຂອຍນີ້ ມາໄດ້ຊົມຄາວດຽວ ບາບເວນ ກໍມາພໍ

36. ຂ້ອຍນີ້ ມາບໍ່ສົມກາສູ້ວ ຜົວຄວາຍດຳບໍ່ສົມດອນ ແຫນ້າ
ຕອກອອນມາບໍ່ສົມຕະກາ ດຳໄດ້ກໍບໍ່ງາມ

37. ອຸ່ນເອີຍ ຄັນບໍ່ວ່າຂ້ອຍຂ້າມຍາມນ້ຳ ປະລູກອອນບໍ່ໄວ້ພາຍຫລັງ ແຫນ້
ປະລູກອອນຂອຍນີ້ເປັນກຳພອຍ ຈົ່ງບໍ່ມີໃຜລຽງ

38. ພໍ່ອາວູເອີຍ ຂອຍຂໍລາຍັງເຈົ້າ ໃຫ້ເຈົ້າຢູ່ສະບາຍດີ ແດ່ເນີ
ຢ່າໄດ້ມີໂພຍໄພ ບຽດບຽນຕົວເຈົ້າ

39. ພໍ່ອາວຸເອີຍ ຂອຍຈິໄດ້ລາຈາກເຈົ້າ ຈິໄປ່ສຽງຄວາມຝັນ
ບາດວາຄວາມຝັນດີ ຈະຕາວຄືນມາຫາເຈົ້າ

40. ຂ້ອຍນີ້ມາ ດາບໍ່ຢາກພັດພາກເຈົ້າ ເວນຫາກຈອງສູ້ະຫນອງໄປ່ ນີ້ເດ
ບໍ່ຢາກໄກສາຍຄໍ ພໍ່ອີເວນພັດມາຕອງ

41. ຂຸອຍູ້ນີ້ມາ ຈິໄດ້ລາຈາກເຈົ້າ ຈິໄປສູ່ກົງດາ ລາກູອນເນີ
ອີໄດລາອວນອົງ ຈາກຫມູເຮົາ ໄປພອນ

42. ລູກຈິໄດ້ລາຈາກູເຈົ້າ ລາພູວກຫມູ່ທັງຫລາຍ ກອນເນີ
ຂໍລາທັງເຖົ້າແກອາຍ ລາອາຍສູ່ຄືນ

43. ຂ້ອຍນີ້ຂໍອວຍພອນໃຫ ຂໍໃຫ້ເຈົ້າຍືນຍາວຸຫມັ້ນ
ພັນວັດສາຢາໄດລາ ແດ້ຫອນ

ຂໍໃຫ້ເຈົ້າສຸກຢູ່ລ້ວນ ກໍເມືອຫມາໃຫຢູດີ

44. ຄອຍຸຢູ່ດີເຢີ ດອກຮັກພົ້ວ ກົວແຕ່ກິ່ນບໍ່ທັນຊົມ ນີ້ເດ
ພໍແຕໂອວາຊົມຍາມດຽວ ຊ້ຳເລົ້າຫາຍໄປຈອຍ

| | |
|---|---|
| 45. ຄ່ອຍຢູ່ດີເຢີ ຕົ້ນດອກຊ້ອນ | ແມ່ນນ້ອງປູກຢູ່ເທິງຫົວ |
| ຢາໄດມີແມງກັດ | ສິງໃດມາຕອງ |
| 46. ຢູ່ດີດຸເຢີ ຕົ້ນດອກຊ້ອນ | ຊ້ອນດອກຝາງແດງ |
| ພໍແຕແສງອະໂນໄທ | ສວນຊິໄກຕົວເຈົ້າ |
| 47. ຄ່ອຍຸຢູ່ເຢີ ຍອດຊໍ້ຟາ | ຜາສາດມຸງມະນີ |
| ໂອວາທັງບາສີ | ຍອດຄຳແກມແກວ |
| 48. ເຈົ້າກູທານແລ້ວ ຂໍໃຫ້ນ້ຳບໍ່ແກວ | ໄຫຼ່ພານຕີນໄດ ເຈົ້າເນີ |
| ຂໍໃຫ້ເງິນຄຳໄຫລ | ຫລັງມາຄືນ້ຳ |
| 49. ຂໍຮູ້ຊື່ນອາຍ ກຶມກິນເຫລົ້າ | ບວຍຫມາກຮູ້ຍ້ຳນອງຍໍ່ຍື້ມກິນເຢີ |
| ໃຫ້ເຈົ້າກິນແຕເຫລົ້າ | ບວຍເຈົ້າໃຫ້ສົງຄືນ |
| 50. ຮູ້ຊື່ນເຈົ້າກິນຍັງເຂົ້າ | ພາຫອງມຸ້ນອງຄ່ອຍແຕ່ງ ເຊີນເຢີ |
| ນອງຫາກຕົກແຕງທາງ | ແປງໄວສູ້ອັນ |
| 51. ຂ້ອຍກໍມາຄູນຄ້ຳ | ບໍ່ມີສັງຈັກສິ່ງ |
| ມີແຕປາກ ແລະ ເວົ້າ | ຄູນເຈົ້າຊົວຊີວັງ |
| 52. ພໍ່ອາວເອີຍ ! ເຈົ້າກິນທານແລ້ວ | ຂໍໃຫ້ເຈົ້າຢືນຍຸຍາວຸຫມັ້ນ |
| | ພັນວັດສາ ຢາໄດຫຼູງ |
| ຂໍໃຫ້ບຸນຊ່ວຍຄ້ຳນ້ຳຊ່ວຍຍູ້ | ຊູ໌ຂົນສູ່ສະຫວັນ ແດທອນ |
| 53. ເພີ່ນມັ້ນບຸເອີຍ ໄດ້ທານແລ້ວ | ຂໍໃຫ້ໄດ້ດັ່ງອ້າງ |
| ໃຫ້ສົມດັງປາຖະຫນາ ນັ້ນເນີ | ຂໍໃຫ້ສົມຈິນດາ ດັ່ງປາຖະຫນາໄວ້ |
| 54. ຂໍໃຫ້ໂຊກເຈົ້າເຂົ້າ | ອະນຸມີສິງນຳສົ່ງ ນັ້ນເນີ |
| ຂໍໃຫ້ເງິນຄຳໄຫລ | ຫລັງມາຫາເຈົ້າ |
| 55. ເຊົາມູ໌ພາກັນຫລົນ | ໃນສວນໃຫ້ມຸ່ນມວນ |
| ຢາໄດໄປໂສກເສົ້າ | ທາງບານບໍ່ຮຸ່ງເຮືອງ |
| 56. ເຊີນເຢີ ເຊີນເພີ່ນລົງມາຫລົ໌ນ | ພ້ອມຫມູ່ທັງຫລາຍ ນັ້ນເນີ |
| ເຊີນເພີນມາປາກເວົ້າ | ດອມເຈົ້າຜູ້ປະສົງ |

57. ຂ້ອຍຂໍອວຍພອນໃຫ້ ເງິນຄຳໃຫ້ໄຫລລົ່ງ ມາທ້ອນ
ຂໍໃຫ້ເງິນຄຳໄຫລ ລົງມາສະເຫມີນ້ຳ

58. ເພີ່ນທູນແລ້ວ ຂໍໃຫ້ເງິນຄຳເຂົ້າ ເຫລືອເຮືອນໄວ້ຕ່າລາງ ນັ້ນທ້ອນ
ຂໍໃຫ້ໂອວາຂໍໃຫ້ໄຫລ ນອງມາ ດັ່ງປານນອງນ້ຳ

59. ອ້າຍເອີຍ ໃຫ້ນ້ອງອາຍ ນ້ອງບໍ່ອາຍເປັນແລ້ວ
ຄວາມອາຍເອີຍແມ່ບໍ່ບອກ ເປັນມາ ແມ່ຂ້ອຍສັ່ງສອນໄວ້ ເມືອໜ້າຢ່າໃຫ້ອາຍ

60. ເຮົານີ້ມາ ບຸນຫລາຍຈຶ່ງໄດ້ມາພົບພໍ້ ບຸນຫລາຍຈຶ່ງໄດ້ມາຈວບກັນມາ
ບຸນເອີຍ ເຮົາຫາກຄາດມາພົບເຈົ້າ ເມືອໜ້າໃຫ້ຮັກກັນ

61. ໄດ້ວ່າໃຈປະສົງແລ້ວ ກໍ່ກາງດົງ ເຮືອນວ່າທົ່ງ ຊີວັງເອີຍ
ໄດ້ວ່າໃຈຂໍຄານ ກາງບ້ານກໍ່ວ່າເສືອແລ່ນ

62. ຂໍໃຫ້ເຈົ້າຍືນຍາວໝັ້ນ ພັນປີເຈົ້າຢ່າລາ ເປັນເນີ
ຂໍໃຫ້ເຈົ້າຂະນອມສຸກຢູ່ລວມ ຕົວເຈົ້າຢ່າລາໂສມ

63. ໂອນໍ້ ເຫັນວ່ານ້ຳຫວຍນ້ອຍ ຢ່າຟ້າວເກືອນຊາຍຖົມ ເທື່ອເນີ
ຂໍໃຫ້ທຳພຽນຄວັດ ຫາກຊິເປັນວັງກວາງ

64. ບຸນຫລາຍຈຶ່ງໄດ້ມາພົບພໍ້ ບຸນພໍ່ຈຶ່ງໄດ້ມາຈວບກັນນໍ
ນ້ອງຮັກພີ່ມາໄດ້ສົມແຈມເຈົ້າ ປາງນີ້ສ່ວນແມ່ນບຸນ ແລ່ນໍ

65. ໂອ້ວ່າ ດວງດອກໄມ້ ກອງຄຸມບໍ່ຫົ່ມຊຸ່ມ ເຈົ້າເອີຍ
ຂ້ອຍມີນາມາໄດ້ຊົມຄາວດຽວ ບາບເວນກໍຈຳເວນ

66. ຂ້ອຍໄດ້ຂ້າມຜ່ານນ້ຳ ປະລູກອ່ອນໄວ້ພາຍຫລັງ ແໜ້ນໍ
ປະລູກອອນຂ້ອຍໄວ້ເປັນກຳພອຍ ບໍ່ມີໃຜລຽງ

67. ຂ້ອຍນຶດເຫມື່ອຍຮ້າຍ ຂໍພັກຜ່ອນເຊົາແຮງ ກ່ອນເນີ
ບາດວ່າເຊົາມີແຮງ ຊິຕາມຫາອາຍ

68. ໂອນໍ ! ຂ້ອຍນີ້ຫລຽວເມືອຟ້າ ເຫັນແຕ່ເຝື່ອໄຫລລີເລືອລີເລື່ອນ ນີ້ເດ
ບໍ່ໃສ່ໄຫລແຕ່ເຝື້ອ ນ້ຳຕານອງກໍ່ລັ່ງລິນ

69. ຂໍໃຫ້ເງິນຄຳເຂົ້າ ເຫລືອເຮືອນໄວ້ຕ່າລາງ ແດ່ທ້ອນ
ຂໍຊ່າງແລະນາ ໂຮມເຂົ້າສູ່ເຮືອນ

ห้ามจำหน่าย

70. ນ້ອງບໍ່ມີຫ່ອນກ້ວຍ ຍັ້ງໄດ້ຮອຫາຫຼອງ ກ່ອນນໍ
ທຸກວັນນີ້ ຂ້ອຍບໍ່ມີພີ່ສອງ ຈຶ່ງໄດວອນຫາອາຍ

71. ນ້ອງຢາກໜຸ່ຄິງໃຫ້ ເປັນຂົວໃຫ້ອາຍໄຕ່ ເບິ່ງເດ
ທັງຫລາຍເພິ່ນໄຕໄນ ຕົວອາຍໃຫໄຕຄົນ

72. ອັນບໍ່ແມ່ນບຸນເຮົານີ້ ກໍາດາຍກໍ່ຫາຍເປົ່າ ແໜ້ນໍ
ອັນບໍ່ແມ່ນບຸນຄົນກ່ອນກີ້ ກໍາແກວຖິກແຕຫລົ່ນ

73. ຊ້າຍເປັນເຊື້ອໄກ່ແກ້ວ ປະສົງຕໍ່ແຕ່ຄື້ນຄໍາ ແໜ້ນໍ
ນ້ອງນີ້ແຕແນວຄິນຫວາຍ ຕໍ່ເອົາບໍ່ມີໄດ

74. ພໍ່ເອີຍ ຂໍຢ່າໃຫ້ໂພຍໄພ້ຕອງ ອັນຕະລາຍຢ່າບັງບຽດ ແດ້ທອນ
ຂໍໃຫເຈົ້າສຸກຢູລອນ ສະເໜີນໍ້າແມຂອງ

75. ນ້ອງນີ້ມາ ພໍ່ແມ່ຕຫລຽວເຫັນໜ້າ ກໍ່ຄືຄູນລຽງແກ່ນ ກັນນາ
ປີນີ້ນອງແກນອາຍປີກາຍອາຍແກນນອງ ປີໜາແກນຜູໃດ

76. ນ່ອນເອີຍ ຄໍາປາກມາບໍ່ເກິ່ງລົ້ນ ຢາກຕັດອອກມາຍໍາ ເບິ່ງເດ
ທັງຫລາຍເພິ່ນນັ້ນກິນຍໍາປີ ນອງຊິກິນຍໍາລົ້ນ

77. ນ້ອງນີ້ມາ ເປັນດັ່ງນົກຢູ່ຕຸ້ມ ກໍ່ເຫົງາຫງ່ອນແຕ່ຄວາມສຸກ
ເພິ່ນວາ ກຸກ ກູ ອັນ ພັດບໍ່ມີໂຕຮອງ

78. ອົດໂຜດເຢີ ໂອວ້າປ່າເນົານ້ຳ ຄາຂີ້ຕົມມຸດນແດວງ ຢູ່ມາ
ຄັນພົບຝາຍໂຜດລຽງ ປານນີ້ສ່ອນຊິຕາຍ

79. ນ້ອງຮັກອາຍ ຮັກໝົດພວງສີໜ້າ ທັງປັນຍາເຈົ້າເວົ້າຄອງ
ນອງຫາກຮັກແຕໃຈອາຍກວາງ ສະເໜີນໍ້າແມຂອງ

80. ໂອນໍ ! ພໍຢາກຕາຍເປັນເສື້ອ ຜືນລາຍໆໃຫ້ພີ່ອາຍນຸ່ງ ນັ້ນເນໍ
ເກີດເປັນຄົນບໍ່ໄດກອນອາຍ ຊິເປັນເສື້ອກອນຄີງ

81. ຮູຮັດຈັ່ງໃດເດ ຂນຸ້ຍນປູ້ອງເຊົາເຈົ້າ ແສນພັ້ນປຸ່ອງອາຍບໍ່ປອງ ເອົາເດ
ນອງນີ້ຫັດແຊກຈົ້ນວາງຫອຍຢູ່ຕົ້ນກະແດງ ປານນັ້ນວາບໍ່ປອງ

82. ຂໍໃຫ້ເຈົ້າໄດ້ໜ່ອຍແກ້ວ ດວງປະເສີດກັບອູກ ເຈົ້າເນີ
ຂໍໃຫສົມຈິນດາ ດັ່ງປາຖະໜາໄວ.

## ກະທູ້ ຊາຍ- ຍິງ.

ລະຫວ່າງ ຊຽງບຸນທັນ ແລະ ປ້າຜິວ ປ້າແພງສີ ປ້າກອງ
ແລະ ປ້າຜິວ ( 2 ).

| | | |
|---|---|---|
| 1.ຊ | ຖາມຂ່າວ ເຈົ້າລູກແຫ່ງຫ້ອງ | ກ້ຳຝ່າຍທາງໃດມານັ້ນເດ |
| | ເຈົ້ານັ້ນເຄືອງໃຈຫຍັງ | ຈຶ່ງດຸ່ງເດີນມາພໍ້ |
| 2.ຊ | ຖາມຂ່າວດົງດອກໄມ້ | ລຳໃດຍັງຢູ່ປ່ຽວແມ່ຄຸນເອີຍ |
| | ຖາມຂ່າວໄມ້ໝູ້ນ | ຊີ້ມຊູ່ຢູ່ຄູ່ລຳແດບ ? |
| 3.ຊ | ເຊີນເຍີ້ ເຊີນໃຫ້ເຈົ້າປານີ້ລຽງ | ຊາຍພອຍທຸກຂະເວດ ແດ່ແມ |
| | ເຈົ້າແມ່ບໍ່ກູ້ມາຝາຍ | ສ່ວນຊິຕາຍຄາວນໍ້ |
| 4.ຊ | ເຈົ້າຈະກູ້ມາ ຢ່າໄດ້ຫນັກຫນ່ວງຊາ | ຮີບຈາຍີດຍາວໄວ່ແດ່ແມ |
| | ຂໍໃຫ້ສັງສິນໄຊ | ເລັ່ງເຮືອກຳຄາວນໍ້ |
| 5.ຍ | ນ້ອງລູກແຫ່ງຫ້ອງ | ກ້ຳຝ່າຍບົວລະພາ ຮັກເອີຍ |
| | ມາບໍ່ມີນາກີນ | ຈຶ່ງດຸ່ງເດີນມາພໍ້ |
| 6.ຍ | ແມ່ນຈະອົດໂຜດເຈົ້າ | ປ້ານແຕ່ບ່ອນຕ່ຳບໍ່ເຫັນຮັກເອີຍ |
| | ປ້ານແຕ່ໄຫມຄຳແກມ | ບໍ່ຢາກກຳຂອງນ້ອງ |
| 7.ຊ | ອ້າຍນີ້ຜິດແຕ່ເປັນຊາຍຂົ້ນ | ບໍ່ມີເຄືອຊີ້ກ່ຽງກອມ ແຫ່ໄດ້ |
| | ນັບແຕ່ເປັນຕົ້ນໄມ້ | ເຄືອຊິ້ກ່ຽວກາບໍ່ມີ |
| 8.ຍ | ປ້ານນັ້ນແລ້ວ ວ່າບໍ່ມີເຄືອຫ້ອຍ | ສັງເປັນຍອຍຍ້ອຍຍື່ງ |
| | ຢູ່ມາ ອັນວ່າສອງຝາກຂ້າງ | ປານມຸ້ງກະຕ່າຍນອນ |
| 9.ຊ | ນ້ອງເອີຍ ອັນວ່າເຊືອຝ່າຍຂ້ອຍ | ແສນພັນເຄືອຂ້ອຍຕັດຂາດ ໝົດແລ້ວ |
| | ມີແຕ່ເຄືອດຳດອນ | ສ່ວນຊິໄປນຳເຈົ້າ |

10.ຊ ດາຊິດັບດາຊິວາຍດາຊິຕາຍຄອບແມ່ຜູ້ຊາງເຍີ້ຍ
ຫົວອະເຫືຍແລະເລີຍຈາແທ້ໄດ
ຕາຍຄອບແມ່ຜູ້ປັ້ນຍາດີ
ຜູ້ຊາຍເອີຍບໍ່ແຫນງແລ້ວ

11.ຍ ບໍ່ແມ່ນເຈົ້າຊິມາຕາຍດີ້ນ
ຄອມດີນບໍ່ມີສາດສັງເດ
ບ່ອນເພືນປູສາດອ່ອນຊ້ອນເຊືອໄວ້
ພະອວນອ້າຍບໍ່ດ່ວນຕາຍ

12.ຊ ຂ້ອຍນີ້ມາ ດາຊິດັບດາຊິວາຍດາຊິຕາຍຄອມເຈົ້າ
ຄອມແມ່ຊຸມນາງເຈົ້າແລ້ວ
ຕາຍຄອບແມ່ຜູ້ແສງຕາຫວານ
ຜູ້ຊ່າງເອີຍບໍ່ແຫນງແລ້ວ

13.ຍ ຂ້ອຍນີ້ມາ ເຊື້ອຜັກແພວ
ແນວຜັກບື່ອແມ່ນໃຜເດ
ຈະຢາກມາເກີອກກົ້ວ
ສົມພານເຈົ້າຈິເກື່າໄປແລ້ວ
ບາດວ່າຫມອງໝື່ນເສົ້າ
ໃຜຊິລ້າງຊ່ວຍເອົາ

14.ຊ ໄດ້ວ່າໃຈປະສົງແລ້ວ
ເປັນຫຍັງກໍແລ້ວຢ່າມັນມາ
ຫາກຊຸກເຂົ້າສູ້ຊອນ
ຊິຕາຍແລ້ວກໍຢ່າມັນ

15.ຍ ໂອໍ ຄວາມປາກເຈົ້າມາບໍ່ເກືງລົມ
ຊິດັກອອກໄປຍຳເບືງເດ
ທັງຫລາຍເພີ່ນນົມກິນຍຳແຕງ
ຂ້ອຍພັດຊິກິນຍຳລົມ

16.ຊ ຄວາມປາກຂ້ອຍນີ້ມາຈິ່ງຈັ່ງຂ
ຄວາມບໍ່ຈິງຂ້ອຍບໍ່ກ່າວໄປແລ້ວ
ລົ້ນບໍ່ຈິງດັ່ງເວົ້າ
ຊິເອົາເຈົ້າເຂົ້າຮ່ວມຮຽງ

17.ຍ ໂອ້ໍ ຊາດທີ່ຄວາມປາກເຈົ້າ
ຄຶຊິຫວານເຫມີດແອ່ງແພງເອີຍ
ຂ້ອຍນີ້ມາແຈະບໍ່ຫັນຫົວລົມ
ຈິອົມຈ້ອຍຫມາກກະດອມ

18.ຊ ເຈົ້າແມ່ ອັ້ນວ່າດວງຈິດຂ້ອຍ
ຢາກໄປຊີມເບືງນ້ຳແຈ່ວເບືງເດ
ນ້ຳແຈ່ວຫວານຈ້ອຍໆ
ກໍໃຈຂ້ອຍກໍ່ດັງຄຽວ

19.ຊ ໃຫ້ເຈົ້າອົດສາຊີມເບືງຫມ້ຽງ
ຂີງແດງບ້ານທ່າບໍ່ລອງເບືງ
ລົ້ນຫາກຄິດ່ງວອນ
ພະອວນນ້ອງຈ່ງຄອຍຄາຍ

20.ຊ ອັນວ່າ ຂິງກັບໝັ້ນຽງ ຊູມກັນບໍ່ມີເບື່ອແທ້ໄດ
ອັນວ່າ ຂ້ອຍແລະເຈົ້າ ບໍ່ມີມື້ໜ່າຍກັນ

21.ຊ ເຈົ້າແມ່ ສັງຊິບົດສະແດງເຫຼືອງ ຊັງໃຜໃຫ້ເຈົ້າວ່າເບີ່ງແມ່
ຊັ້ງອ້າຍຫິດຜູ້ມັ້ງຽງ ຊັ້ງອ້າຍຊຽງຜູ້ມັ້ງໃກ້ຊັ້ງຂ້ອຍຜູ້ມັ້ງໄກ

22.ຍ ໂອໍ ປຽບດັ່ງດວງມາລານົ ຊິຂໍແບ່ງປິດເອົາຫັ້ນແລ້ວ
ເຈົ້ານັ້ນ ປຽບດັ່ງດາວຢູ່ຟ້າ ຊິແຫງນຫນ້າເບີ່ງດາວ

23.ຊ ຂ້ອຍນົມາ ປຽບດັ່ງເຈັ້ຽຕາຍຫ້ອຍ ປາຍຜ້າຂອຍແຂອນຢູ່ ແທ້ໄດ
ຄັ້ນບໍ່ອ້າຍແລະນ້ອງ ຊິຕາຍຫ້ອຍຢູ່ຜູກຮອ

24.ຍ ຄຽດດເດ ນ້ອງນົເກີດບໍ່ແມ່ນມ ຊ້ຳພັດເກີດວັນສະແຫນງນົມາ
ພໍຢາກແທງຄໍຫຼັບພໍຢາກຕັດຄໍຕາຍ ຄອຍພີ່ຊາຍວັນນົ

25.ຊ ຢ້ານແຕ່ແມ່ຈິ່ງແຕ່ຫນ້າ ກັ້ງແຕ່ບ່ອນຕາເຫັນ ແທ້ໄດ
ຢ້ານແຕ່ແມ້ກັງແຕ່ປາກບັ້ງ ຊິຂັ້ງຂີ່ຢູ່ໃນ

26.ຍ ຖ້າບໍ່ຈົງດັ່ງເວົ້າ ລືມຄວາມຈິງຂ້ອຍບໍ່ກ່າວໄປແລ້ວ
ຖ້າບໍ່ຈິງດັ່ງປາກຖ້າບໍ່ເອົາດັ່ງເວົ້າ ເມືອຫນ້າໃຫ້ຮ່າກິນ

27.ຊ ຢ້ານແຕ່ແມ່ຕິຖະແຫລງລົມ ຕຶມບໍ່ມີພະລາດມີນແທ້ແລ້ວ
ຢ້ານແຕ່ແມ່ຕືອະຂ້ອຍເຖົ້າ ເສັ້ຽລ້າແລ້ວບໍ່ເອົາ

28.ຍ ຂ້ອຍນົຄາຊິ້ລຽງຊ້າງເຖົ້າ ຂາຍງວງງາໄດ້ກິນຄ່າມັນມາ
ຄັ່ນວ່າລ້ຽງຊ້າງນ້ອຍ ຕາຍຈ້ອຍຄ່າຈຸ່ມຈືມ

29.ຊ ເຈົ້າແມ່ຂ້ອຍນົມາແນວນາມເຊ້ອຊ້າງນ້ອຍ
ຊິນຳຮອຍທຸກບາດຍ່າງ
ບໍ່ໄດ້ແມ່ຊ້າງຮາຍ ຕາຍແລ້ວກໍ່ບໍ່ເປັນ

30.ຍ ໂອໍ ເຈົ້ານັ້ນແນວນາມຊ້າງ ປະສົງກິນແຕ່ຮຽວໄຜ່ນັ້ນເດ
ນ້ອງນົແນວຍ່າງກົມ ກໍ່ດົມຫນ້າດັ່ງຄວາຍ

| | | |
|---|---|---|
| 31. ຊ | ຂ້ອຍນື້ເຊື້ອໄພ້ນອຍ | ເຕັນຣອຍສານກ່ຊ້ຳສິ່ນແທ້ໄດ |
| | ມາພົບແມຜູ້ແສງຕາຫວານ | ເຂົ້າເບິ່ງງາອາໄສ້ຊາງ |
| 32. ຊ | ເຊີນເຍີ ເຊີນນ້ອງຂື້ນຂີ້ຊາງ | ກັ້ງຣິ່ມເປັນພະຍາ ເຈົ້າເນີ |
| | ຂ້ອຍນື້ມາ ດາຊິເປັນເສນາ | ແຫ່ແຫນຕີນຊ້າງ |
| 33. ຍ | ອັນວ່າບຸນນ້ອງນ້ອຍ | ສົມພານນ້ອງພັດຕ່ຳຊິວັງເອີຍ |
| | ແສນຊິຕັດມັດຂໍແສນຊິຍໄມ້ຄ້ຳ | ຊູ້ຂໍ່ນກັບເຖີງ |
| 34. ຊ | ເຈົ້າແມ່ ແນວນາມຊ້າງ | ປະສົງກິນຫຍ້າສູງກ່ອນຊິວັງເອີຍ |
| | ອັນວ່າ ຫຍ້າແພດນ້ອຍ | ຕົວເຈົ້າເລົ່າບໍ່ກິນ |
| 35. ຊ | ອົດເຍີອົດສາລ້ຽງຊ້າງນ້ອຍ | ຊາຍພອຍໄວ້ເປັນຄູ່ ແດ໊ທອນ |
| | ຫຼອນເຫື່ອມີງວງງາ | ຄ່າແພງເປັນຕື້ |
| 36. ຊ | ເຈົ້າແມ່ຄູນເອີຍ ສັງຊິປະຂ້ອຍຖິ້ມ | ກາງດົງໃນປ່າຊັ້ນເດ |
| | ສັງຊິປະຂ້ອຍໄວ້ | ກາງແກ້ງແມ່ທະເລ |
| 37. ຍ | ນ້ອງບໍ່ໄດ້ປະລະຖິ້ມ | ຕັ້ງເປັນພີ່ສະຫາຍແພງຢູ່ມາ |
| | ຕັ້ງວ່າເອົາຕາງແຫວນ | ຂອດຜ້າໄບຮັກສາໄວ້ |
| 38. ຊ | ປ້ານແຕ່ແມ່ປະຂ້ອຍຖິ້ມ | ຖຽງໄຮ່ແກມຫມູ່ກາຖຽງນາແກມຫມູ່ໄກ່ແທ້ໄດ |
| | ຢ້ານແຕ່ແມ່ປະຂ້ອຍຖິ້ມ | ແຄມຮົ້ວປ່າຫມາກເຍົາ |
| 39. ຍ | ໂອນໍ ເສັຽດາຍເດ ຄັນຫາກພີ່ເປັນຂອງນ້ອງ | |
| | | ຊິແຂວນຄໍຕາງຮວດເຄື່ອງເບິ່ງເດ |
| | ປ້ານແຕ່ແມ່ນຂອງແຂກຄ້າ | ຊິເສັຽຫນ້າເມື່ອລຸນ |
| 40. ຊ | ເຈົ້າແມ່ ສັງຊິຍ້ອງຕໍ່ຫນ້າ | ຍ້ອງໃຫ້ເພີ່ນຕາເຫັນຊັ້ນເດ |
| | ບາດວ່າພາຍຫຼັງອົມ | ຫມາກກະດອມແຄມຮົ້ວ |
| 41. ຊ | ເຈົ້າແມ່ ສັງຊິປະຂ້ອຍໄວ້ | ກາງດົງໃນປ່າເຊັ້ນເດ |
| | ປະໃຫ້ຂ້ອຍເປັນສະນີລີງລົມ | ຈ່ອງເຄີອຫາເຈົ້າ |

| | | |
|---|---|---|
| 42. ຍ | ຂ້ອຍບໍ່ປະລະຖິ້ມ | ຕັ້ງຕົ້ມກິ່ງສາຂາຢູ່ນາ |
| | ປຽບດັ່ງວາໃຍເພີຍ | ພັດເອົາຕົວອ້າຍ |
| 43. ຊ | ປ້ານແຕ່ແມ່ເຈົ້າປະເຊືອກເອິງ | ຊິມາເບິ່ງທາງຖະໜົນ ແທ້ໄດ |
| | ໃຫ້ເຈົ້າພີ່ເປັນດັ່ງຄວາຍແທງເຄົາ | ມັດຜູກເສົາປະຈຳໄວ້ |
| 44. ຍ | ຖ້າຂ້ອຍລະເຊືອກໄວ້ | ປ່າຟ້າວຕູ່ເຮືອໄຫຼແດ່ເນີ |
| | ຊາດທີ່ເຮືອຄາຂອນ | ລ່ອງໄປບໍ່ໄດ້ |
| 45. ຊ | ປ້ານແຕ່ແມ່ລະເຊືອກເອິງ | ເຈົ້າຊິປ່ອຍເຮືອໄຫຼ ແທ້ໄດ |
| | ປະໃຫ້ໄຫຼຕາມແປວ | ມອບຊິວ້າງຍັງແກ້ງ |
| 46. ຍ | ຊາດທີ່ເຮືອລ່ອງແກ້ງ | ແປງຫົວໃຫ້ມັນລ່ອງກັບມາ |
| | ລືມວ່າຫົວລ່ອງທ້າຍອ້າຍຄ່ອງນ້ອງ | ແສນຊິຫຼົ້ມກໍ່ບໍ່ຈົມ |
| 47. ຊ | ຂ້ອຍນັ້ນມາ ປຽບດັ່ງແພພັນຊັ້ນ | ຊິຂວາງຂວາງປິ່ນໄປແລ້ |
| | ດາຊິຕຳແມ່ກອນ | ຈົມແລ້ວກໍ່ປ່າມັນ |
| 48. ຍ | ໂອນໍ ສິບຊິຫຼົ້ມຊາວຊິຫຼົ້ມ | ໃຫ້ໄປຈົມວັງກອງທ່າອີ່ຮຽມເນີ |
| | ສິບຊິປ້ານຊາວຊິປ້ານ | ຂໍໃຫ້ປານວາງກາງ |
| 49. ຊ | ໄດ້ວ່າ ໃຈປະສົງແລ້ວ | ແສນຊິຈົມກໍ່ແລ້ວປ່າມັນມາ |
| | ດາຫຼົ້ມບອນຂອນດາຊິບອນບອນຈອດ | ຕາຍແລ້ວກໍ່ປ່າມັນ |
| 50. ຊ | ເຈົ້າແມ່ເອີຍຂ້ອຍປຽບດັ່ງກົກດູ່ແລ້ງ | ຕັ້ງຢູ່ປ່ຽວຈອມຜາພຸ່ມແລ້ວ |
| | ຝົນບໍ່ມາໂຮຍຮຳ | ສ່ວນບໍ່ເປີໃບຊອນ |
| 51. ຍ | ຝົນບໍ່ມາໂຮຍໃຫ້ | ກົກຊິຕາຍແລ້ງເປົ່າລະຕົມ |
| | ຝົນບໍ່ມາໂຮຍຮຳ | ສ່ວນຊິຕາຍວັນນີ້ |
| 52. ຊ | ຂ້ອຍນັ້ນມາ ປຽບດັ່ງບົວບານບ້າງ | ກາງສະເພົ້າຕົມປ່ຽວ ແທ້ໄດ |
| | ສ່ວນຊິຕາຍແຫ້ວແຫ້ງ | ດອນນ້ຳກໍ່ບໍ່ແຫ້ງ |

53. ຍ ດອກໄສ້ເດືອ ເດືອຂຽວເອີຍເຈົ້າບໍ່ເຫັນຕາຕອງ

ອີບານດາຍແລ້ວເປົ່າລະຕືມ

ມັນຫາກຫອມຮ່ອງເຮົ້າ ໃນຫ້ວຍປຽວພອຍ

54. ຊ ດອກສະກຸນບອກວ່າບຸນພົ້ນອຍ ອີຖອຍເລື່ອນໄປຕາມລົມກ່ອນແລ້ວ

ດອກສະກຸນບອກວ່າມັນຫອມຈີງໆ ຮອດຄະນິງເຖິງເຈົ້າ

55. ຊ ດາຊີດັບ ດາຊີວາຍດາຕາຍຄອບເຈົ້າຜູ້ຊ່າງເຍີ້ຍ

ຫົວອະເຕີ່ຍ ແລະເລີຍຈາ ແທ້ໄດ

ຕາຍຄອບແມ່ປັ້ນຍາດີ ຜູ້ຊ່າງເຍີ້ຍບໍ່ແຫນງແລ້ວ

56. ຍ ນ້ອງຈັກຕາຍຄອບອ້າຍຜູ້ຊ່າງເນື້ອດນາວ

ເຈົ້າປາກອ່ອນລະເນົາຈິດ ແທ້ນໍ

ເສັຽພິດເໝືອນຢາເມົາ ໃຫ້ນ້ອງຫຼົງສະຕິຍອນ

57. ຊ ເຈົ້າແມ່ ສັງຊີມາຕາຍຍ້ອນ ດອມໝາກສີດາດີບນັ້ນເດ

ອີມບໍ່ເປັນຕາທານຫວານບໍ່ເປັນຕາກິນ

ຫ່ອມໃດຊີດາດົບ

58. ຍ ຂ້ອຍນໍ້ ດາຊີດັບດາຊີວາຍດາຊີຕາຍດອມເຈົ້າ

ເປັນຫຍັງກໍຕາມຊ່າງມັນເຫ້ອນ

ດາຊີຜ້າປົກຫົວເຂົ້າສູ່ຊອນ ຕາຍແລ້ວກໍບໍ່ແຫນງ

59. ຊ ເຈົ້າແມ່ສັງຊີຕາຍຍ້ອນ ດອມຊາຍຄົນຊື່ອນັ້ນເດ

ບ່ອນປູ່ສາດລາຍບ່ອນເພີ່ນຫວາຍສາດອນ

ສັງບໍ່ດົນຕາຍ

60. ຍ ຂ້ອຍນໍ້ນາກວ່າດັ່ງດຽວກັບເຈົ້າແລ້ວ

ຕາຍຄອບເຈົ້າຊ່າງເວົ້າ

ຕາຍຄອບພໍ່ຜູ້ປັ້ນຍາດີ ຫູອກລອນແຕ່ຄົນໃບ້

61. ຊ ເຈົ້າແມ່ ສັງຊີຕາຍນຳຂ້ອຍຮູ້ບໍ່ຮ້າງຮ້າຍ

ຢ້ານເຈົ້າໝ່າຍໃນສັນດານ ພຸ້ນແລ້ວ
ຂ້ອຍນໍມາ ແນວນາມສັດ ຣູບບໍ່ງາມສະເໜີເຈົ້າ

62.ຍ ແມ່ນູໃຜເດວ່າເຈົ້າຣູບຮ່າງຮ້າຍ ຂ້ອຍຈິໃສ່ອັ້ນໃໝ່ກ່ອນຫ້ອນ
ຂໍໃຫ້ເຈົ້ານອນສະແຄງຕຽງ ..................
63.ຊ ຂ້ອຍນໍມາ ແນວວ່າກາດຳປໍ ຈິທຣມເຈົ້າບໍ່ຫ່ອນຄືແລ້ວ
ຂ້ອຍນໍມາເຊື່ອໄພ່ນ້ອຍ ຈິທຣມເຈົ້າບໍ່ຫ່ອນຄື

64.ຍ ຂ້ອຍວ່າດັ່ງຄຣວເຈົ້ານັ້ນແລ້ວຂ້ອຍນໍກາດຳປໍ
ຢາກທຣມທົງກໍຫ້ວຍຢາກນໍມາ
ຂ້ອຍນໍມາ ເຊື່ອທົງຫ້ອຍນ້ອຍ ບໍມີອ້າງຕໍພະຈັນ

65.ຊ ເຈົ້າແມ່ ຫາກເຊໍອຊາດຊ້າງ ຈິໝາຍຮ່ວມວົງແຫວນເຈົ້າແລ້ວ
ຮ່ວມຮັງສູງ ເພື່ງພາອາໃສເຈົ້າ

66.ຍ ຂ້ອຍກ່າດັ່ງຄຣວເຈົ້ານັ້ນແລ້ວຍົກຂ້ອຍນ້ອຍ
ບໍ່ໄດ້ຮ່ວມວົງແຫວນເຈົ້າແລ້ວ
ຂ້ອຍນໍມາຫາກແມ່ນແນວກາດຳ ບໍ່ຫ່ອນທຣມທົງແກ້ວ

67.ຊ ຂ້ອຍຢ້ານແຕ່ເຈົ້າຈິປະລະຖໍມ ສີຄຳດີຣູບໍຫູ ແຫ້ເດ
ຢ້ານແຕ່ຕົກໃສ່ນ້ຳ ຟູຂນແມ່ນບໍ່ເຫັນ
68.ຍ ຂ້ອຍນໍມາຕັ້ງຮັກເຈົ້າ ກໍແສນຍາກເພິ່ງແພງຢູ່ແລ້ວ
ເຈົ້າຫາສທຳກະບົດໃຈ ຮັກໃໝ່ມາຈົມຊ້ອນ

69.ຊ ຢ້ານແຕ່ ແມ່ຮັກພໍມີໜ້າ ຈິໄກຕາເຈົ້າເປັນເພື່ນແຫ້ໄດ
ຮັກແຕ່ພວມເຮັ່ງຮ້ອນ ເຢັນແລ້ວກໍເລົ່າຫາຍ

70.ຍ ໄດ້ວ່າຈິງໃຈແລ້ວ ຄວາມບໍຈິງນ້ອງບໍ່ກ່າວໄປແລ້ວ
ຖ້າບໍຈິງດັ່ງນັ້ນ ຈິລົງໝໍ້ແປດຫູ
71.ຊ ຫຼືວ່າຈິງຈັງແທ້ ຄວາມບໍຈິງຢ່າກ່າວມາເນີ
ລົ້ນບໍຈິງດັ່ງເວົ້າ ໃຫ້ລົງໝໍ້ຈຸ່ມຈົມ

72. ຍ ຂ້ອຍນີ້ ກົ່ງຕັ້ງເຈົ້າ — ສະເໜີຕົ່ງຕົ່ມມາ
ມິໄດ້ຍໍຄໍອັນ — ສົ່ງໃດມາຕ້ອນ

73. ຊ ອັ້ນວ່າເຈົ້າຫາກຕັ້ງຕໍ່ຂ້ອຍ — ສະເໜີຕັ້ງຕໍ່ ແທ້ບໍ່
ປ້ານແຕ່ເຈົ້າຕັ້ງຕໍ່ຂ້ອຍ — ສະເໜີນ້ຳບອກຄວາຍ

74. ຍ ເຈົ້ານັ້ນມາ ວ່າເຈົ້າຕັ້ງຕໍ່ຂ້ອຍ — ເຈົ້ານັ້ນມາ ພາຍຫຼັງເຈົ້າສະເໜີ
ເຄີຍຜັກແວ່ນຢູ່ມາ
ຮາກຢູ່ພົ້ນ — ຈຶ່ງຟູ່ຂົ້ນແຕ່ໃບ

75. ຊ . ເຊີນເຍີ ເຊີນນ້ອງໄປປູກແປງສ້າງ
ພາຍຫຼັງຈູ້ຂອງເກົ່າອ້າຍເຍີ
ຂ້ອຍນັ້ນມາ ດາບນີ້ເມືອແພງ — ກອດຜ້າຟາຊຶມແກ້ມ

76. ຍ ສຸດແຕ່ຕາເຫັນແລ້ວ — ຊິມາອຳໃຫ້ເຫີຍກຶນໃດເດ
ເຊີນໃຫ້ເຈົ້າຍົກລົ້ວໃຫ້ — ມາພົ້ຊ່ວຍອຳ

77. ຊ ຂ້ອຍນັ້ນມາ ໄດ້ແຕ່ເປັນຊາຍຂົ້ນ — ບໍ່ມີເຄີຍຊິກົ້ງກ່ອມ ແທ້ໄດ
ຂ້ອຍນັ້ນມາເປັນຕົ້ນໄມ້ — ເຄີຍຊິກຮົ້ວກໍບໍ່ມີ

78. ຍ ລ້າງເຮີຍ ປ້ານນັ້ນເມື່ອເຈົ້າຮ້າຍ — ຝ່າແດນກາງຄອງວ່າໂປດໄປແລ້ວ
ປ້ານມລູກເຈົ້າເຮືນ — ມາຫົ້ນອຶ່ພນອມ

79. ຊ ລ້າງ ຕາໄຫຼເອີຍຄັ້ນຂ້ອຍມີເມັດແລ້ວ
ບໍ່ລົງເຮືອນໃຫ້ມັນເມື່ອຍເສັຽແລ້ວ
ແຫນງວ່ານອນຢູ່ບ້ານ — ຍັງຊິໄດ້ກ່ອມເມັຽ

80. ຍ ຊາດທີ່ຄ້ອນໄຟນົ້ — ສີສຸດຕາເອີຍ ໃຜຫ່ອນຫໍ່ເປັນເດ
ໄຟຫາກໄຫ້ມແຜນພົ້ນ — ແສນນ້ຳຫໍ່ບໍ່ເປັນ

81. ຊ ເຊີນເຍີເຊີນເຈົ້າຈັບເອົາຫ້ອນ — ຊູ້ມົງທຽມອີກຂ້ອຍເຍີ
ເຊີນເຈົ້າຈັບເອົາມາ — ບອກພີ່ຊາຍໃຫ້ມັນແຈ້ງ

82. ຍ ໃຜເດ ທ່ອນຊິຈັບເອົາໄດ້ ຊູ້ມື່ງເມັຍອ້ວນເພີ່ນມາ
ສຸດແຕ່ເຫັນເຕັມຕາ ບໍ່ທອນບາຍເອົາໄດ້.

83. ຊ ເຊີນເຍີ ເຊີນເຈົ້າຈັບເອົາຫ້ອນ ສີດາແດງໃຫ້ຈັຍພູກເອົາຫ້ອນ
ຄັນວ່າຈັບພູກໄດ້ ກະແຈໂສ້ໃຫ້ໃສ່ເອົາ

84. ຊ ເຈົ້າແມ່ຄຶດເຫັນເສື້ອ ພີ່ນຢູ່ເຮືອນສ້າງບໍ່ມຸ່ງມາເດ
ຄຶດຮອດຊູ້ຢູ່ຫັ້ນ ສ້າງບໍ່ອູ້ມເຈົ້ຍມາ

85. ຊ ອົດສາເຍີ ອົດສາໄຂຄວາມປາກຕ້ານ ຈາຕໍ່ຊາຍຈົ້ນແດ່ແມ້
ເຊີນແມ່ໄຂວາຈາ ບອກມາຄາວນ໌

86. ຊ ແມ່ເຈົ້າເອີຍ ເຈົ້ານັ້ນຢ່ານແຕ່ບອນຢ່ຽນ
ຢ່ານແມ່ຫວງແຫນເຈົ້າ
ຢ້ານພົວແພງໃນອົກ ຈິ່ງບໍ່ໄປນຳເຈົ້າ

87. ຊ ອົດສາເຍີ ອົດສາໄຂວາຈາຫຼົ້ນ ນຳກັນໃຫ້ມັ່ນມ່ວນກ່ອນເຍີ
ເຊີນແມ່ໄຂວາຈາ ປາກດອມນຳອ້າຍ

88. ຍ ເມື່ອຈະເຍືອນໂພດເຈົ້າ ກໍຈະມີຕໍ່ພູພານເດ
ຢ້ານແຕ່ພູຜ້າຫັກ ຊິເກື້ອນເຕັ້ງຕົວນ້ອງ

89. ຊ ເຊີນເຍີເຫັນວ່ານ້ຳຫວຍນ້ອຍ ຢ່າຟ້າວເກື້ອນຊາຍຖີ້ມເທື່ອເນີ
ບາດວ່າບຸນພັ້ນມີ ສ່ວນຊິເປັນວັງກ້ວາງ

90. ຊ ນ້ອງທີ່ຮັກ ຄວາມຮັກໃຫ້ຢູ່ເນີ້ອ ບໍ່ຮູ້ເມື່ອມັ້ນຫາຍ ແທ້ໄດ
ຄວາມຮັກຢູ່ໃນຫົວໃຈ ບໍ່ສວ່າງຫາຍໄປໄດ້

91. ຍ ເຈົ້ານັ້ນເອີຍ ກຽງແຕລົ້ນ ຄວາມຊ່າເປັນປະຫານວ່າລີ້
ອັນວ່າພາຍໃນອົ້ນ ຫມາກກະດອມແຄມຮົ້ວ

92. ຊ ຂ້ອຍນ້ຳມາ ກ່ຽວລ້ອຍຊ້ອຍ ນ້ຳອ້ອຍທີ່ຕ່ອງຕົ້ດພູ້ນແລວ
ຂ້ອຍນ້ຳມາ ປັ້ດມື້ມາ ສ່ວນບໍ່ມີໃຜຊ້ອນ

24/7 ຫ້າມຈຳໜ່າຍ

93.ຍ ເຈົ້ານົ້ນເອີຍ ປາກມາບໍ່ເກັ່ງລົມ ພໍຢາກປາກອອກມາຍຳເບີ່ງເດ
ທັງຫລາຍ ເພີ່ນນັ້ນກິນຢາປີ ຂ້ອຍຊິກິນຢາລົມ

94.ຍ ເຈົ້າພໍ່ ຜູ້ເພີ່ນລະເຊືອກໄວ້ ນ້ອງຄອງວ່າເຮືອໄຫລ ນົມາ
ບໍ່ຮູ້ຈັກວ່າ ເພີ່ນນັ້ນເອົາຂໍກະແຈຈົມ ຢູ່ໃນວັງນ້ຳ

95.ຍ ໂອນໍ ມັນຫາກເຫຼືອແຮງນ້ອງ ທັງພາຍທັ່ງທີ່ບໍ່ໄປແລ້ວ
ກ່ອງຜ້າຈ້ຳ ນ້ຳທີ່ຍອຍ ແຂນເສື່ອຊິຊຸ່ມອີ່ນ

96.ຍ ອັນວ່າ ປາພັງຂ້ອງ ຊິງອງຕາຍຄອມເຈົ້າອຸ່ນ ນົມາ
ເຈົ້າອຸ່ນມາບໍ່ຈັກອອກຂາຍມາບໍ່ບາຍອອກຖົມ
ຊິພາຂ້ອງເໜື່ອາດາຍ

97.ຊ ອັນວ່າ ເຮືອລຳນ້ອຍ ຢ່າຟ້າວຕ່າງຂອງໜັກກ່ອນແມ
ບາດວ່າມີຮູຊິ ບຸ່ນລົງທາງກ້ອງ

98.ຊ ໂອ້ວ່າ ປາບຶກນ້ອຍ ປະສົງຟອງແມ່ນ້ຳໃຫ່ຍພຸ້ນແລ້ວ
ດາຊິຕາຍແມ່ກ່ອນ ຕາຍແລ້ວກ່ຢ່າມັ້ນ

99.ຍ ນ້ອງນົມາ ພໍຢາກອັ້ດແມ່ນ້ຳ ໃຫ້ແປວເປີ່ງເມືອເໜືອນົ້ນເດ
ນ້ອງນົເອີຍ ພໍຢາກອັດວັງຂຽວ ບໍ່ໃຫ້ປາຫຽວໄດ້

100.ຍ ເຊີນເຍີ ເຊີນເຈົ້າອັດແມ່ນ້ຳ ໃຫ້ແປວເປີ່ງເມືອເໜືອເຈົ້າທ້ອນ
ຢ້ານແຕ່ມີເຝືອນບິດ ບຸ່ນລົງທັງພົນ

101.ຊ ຢ່າໄດ້ປະໝາດແກ້ງ ເຫັນວ່າບໍ່ມີຟອງນົມາ
ບາດວ່າ ມີເຝືອນບິດ ຊິຈ່ອງລົງຈຳພົນ

102.ຍ ອັນວ່າ ແກ້ງກ່າຍແກ້ງ ຂ້ອຍຊິລ່ອງຄອນກາງແທ້ໄດ
ດາຊິລ່ອງດາຊິປ່ອງແຕ່ຄອນກາງ ເບີກສະເພົາກາງແກ້ງ

103.ຊ ອູ້ນວ່ຖ ແກ້ງກ່າຍແກ້ງ ບໍ່ມີຍາກຊູ້າສັງ
ນອງນ ຊິເອົາເຮືອແຊມ ລອງໄປກັຍງໄດ້

104.ຊ ອັນວ່າ ແກ້ງກ່າຍແກ້ງ — ໃຫ້ຂ້ອຍລ່ອງຄອນໃດເດ໊
ໃຫ້ຂ້ອຍລ່ອງຄອນກາງ — ຊ້ຳພັດໄປຕຳແກ້ງ

105.ຍ ຍ່ອງໆໂອ້ວ່າເຮືອລ່ອງແກ້ງ — ບໍ່ມີຍາກຊາສັງ ມ໊າ
ຫາກອ້າຍຄອນຫົວດີ — ສ່ວນຊິ໊ມແກ້ງ

106.ຊ ມ່ອນເອີຍ ອັນວ່າແກ້ງກ່າຍແກ້ງ — ໃຫ້ຂ້ອຍລ່ອງທາງໃດເດ໊
ອ້າຍພະພໍ່ດາຊິເອົາເຮືອແຊມ — ລ່ອງໄປຈຳແກ້ງ

107.ຍ ຍ່ອງໆເອີຍ ເຮືອລ່ອງແກ້ງ — ໃຫ້ເຈົ້າລ່ອງຕາມແປວນັ້ນທ້ອນ
ອັນວ່າຫົວຄ່ອງທ້າຍ ອ້າຍຄ່ອງນ້ອງ ຂໍໃຫ້ໄດ້ຮ່ວມກັນ

108.ຊ ແມ່ນວ່າ ຕາໄຫຼເອີຍ ເຮືອລ່ອງແກ້ງ
ຊິແປງຫົວໃຫ້ຄ່ອງກ່ອນແລ້ວ
ອ້າຍຄ່ອງນ້ອງ ນ້ອງຄ່ອງອ້າຍ — ຂໍໃຫ້ໄດ້ຮ່ວມກັນ

109.ຍ ແກ້ວລ້າງ ອັນວ່າເຮືອແຄມຫ້ຽນ — ໃຜບໍ່ຫຼຽວກໍຕາມຊ່າງຊາຍເອີຍ
ອັນວ່າເຮືອນ້ຳກຽງ — ຊາວຫຼຸ້ມກໍບໍ່ປານອ້າຍເອີຍ

110.ຊ ໂອນໍ ຕາໄຫຼເອີຍ ໄດ້ວ່າໃຈປະສົງແລ້ວ
ເປັນຫຼັງກໍແລ້ວຢ່າມັນມາ
ຂໍໃຫ້ເອົາເຮືອລ່ອງແກ້ງ — ຕາຍແລ້ວກໍຢ່າມັນ ມ໊າ

111.ຍ ແກ້ວລ່າງ — ອ້າຍຫນ້າຮັກແຕ່ໄກ້ນ້ອງມ໊າ
ສະຊົວດເອີຍ — ເລວເຜີ໊ງຮ້າງຊ້ຳມີແມ່ ຫວງແຫນຢູ່ມາ
ນ້ອງມ໊າ ສະຊົວດ — ເລວແຕນບົວ ຊ້ຳເລົ່າມີຕົວຊ້ອນ

112.ຊ ນ້ອງຫຼີ່ຮັກແພງຂັວນເອີຍ — ນ້ອງແມວຫາມເຜີ໊ງ
ບໍ່ສານຮັ້ງແກ້ວ — ກໍ່ຢ່າມັນມາ
ເອົາແຕ່ກົກໄມ້ເມີ໊ງ — ຕາມເຜີ໊ງຊິແວ່ເອົາ

113.ຍ ແກ້ວອອດລອດ — ຍອດອ້າຍບ່າວພໍ່ເມັຽເອີຍ

| | |
|---|---|
| ນ້ອງກະເວົ້າດົ້ງດຽວ | ອ້າຍນັ້ນແລ້ວ |
| ນ້ອງຈິໄປເອົາເຜິ້ງ | ດົງໃດເດຊິມາວ່າຍ ນົ້ເດ |
| ນ້ອງນົ້ນມາຂໍໄປເອົາແກ້ວລອດຟ້າ | ແສົ້ງສ່ອແມ່ນແກນແດງ ນົ້ນມາ |
| 114.ຊ ແກ້ວລ້າງຕາໄຫຼເອີຍ | ແກ້ວຕໍ່ແກ້ວ |
| ແກ້ວເກີດ | ເມືອງແກ້ວພຸ້ນແລ້ວ |
| ເຊີນນ້ອງເປັນແຫຼວ | ໃຫ້ເອື້ນລົງເອົາແກ້ວ |
| 115.ຍ ແກ້ວອອດລອດ | ຍອດອ້າຍບ່າວພໍ່ເມັຽເອີຍ |
| ເຈົ້ານັ້ນມາໄດ້ຫນ່ວຍແກ້ວ | ຢ່າຟ້າວເປີບໃຈຫລາຍເທື່ອເນີ |
| ບາດວ່າຮົງໆໃສ | ຫນ່ວຍຂວງບໍ່ມີຮູ້ |
| 116.ຊ ເຈົ້າແມ່ ດາຊິຕາຍຄອບແກ້ວ | ແກ້ວເກີດເມືອງແກ້ວແທ້ໄດ |
| ດາຊິຕາຍຄອຍແມ່ແກ້ວແສງໃສ | ຫນ່ວຍຂວງໃຫ້ມັນຮູ້ |
| 117.ຍ ເຈົ້ານັ້ນເອີຍ | ຖ້າຈິຕາຍຄອບ ນ້ອງ |
| ແຫນງໄປຕາຍ · | ດອມຜູ້ອື່ນພຸ້ນເຍີ |
| ຜູ້ອື່ນນັ້ນມາ ດີກວ່ານ້ອງ | ຫລັ້ງອ້າຍບໍ່ດົນຕາຍນົ້ເດ |
| 118.ຊ ໄດ້ວ່າ ໃຈປະສົງແລ້ວ | ເປັນສັນໃດກໍຕາມຢ່າມັນມາ |
| ຜ້າປົກຫົວເຂົ້າຮ່ວມຫ້ອງ | ຊິຕາຍຊ້ຳກໍຢ່າມັນ |
| 119.ຍ ແກ້ວອອດລອດ | ຍອດອ້າຍບ່າວຜູ້ງາມເອີຍ |
| ອ້າຍນັ້ນເອີຍ ກຽ້ງແຕລົ້ນ | ເຈົ້າແຍ່ສະເຫມີແລນນົ້ມາ |
| ພໍຢາກຕັດມາແກງ . | ເພາະພີ່ຊາຍມີຫລາຍລົ້ນ |
| 120.ຊ ຂ້ອຍນົ້ມາ ກ້ຽງລ້ອຍຊ້ອຍ | ສະເຫມີໄຂ່ຮອງຄ້າຍພຸ້ນແລ້ວ |
| ຂ້ອຍນົ້ມາ ປັດມີມາ | ດາບໍ່ມີໃຜຊ້ອນ |
| 121.ຊ ອົດທຸກ ຫ້ວງຈິໄດ້ສະຫນຸກຍ້ອນ | ຊິມາເປັນປາງເປົ່າຊັ້ນເດ |
| ອົດທຸກ ຫ້ວງຊິເຂົ້າຫ່ມກ້ວາງ | ສັ້ງຊິໄດ້ແຂ່ງຝັນ |

122.ຊ ທຸກວັນນີ້ ມີແຕ່ຫົວກັບໄຫ້ ເບົາໃນຄຶດງຮອດຢູ່ນາ
ຄຶດຮອດສີແຈ່ມເຈົ້າ ທາງກ້ຳຝ່າຍລະຄອນ (ນະຄອນ)

123.ຍ ຂ້ອຍນີ້ມາ ກ່າວ່າດົ່ງດຽວ ກັບເຈົ້ານັ້ນແລ້ວ
ນ້ຳຕາລົ່ງໄຫຼຕົກຢູ່ນາ ນ້ຳຕາຂ້ອຍໄຫຼຕົກລົງ
ເຖິງແກ່ນີ້ງວ ຊິມາປີ້ນປີ່ງໃບ

124.ຊ ໂອໍ ເຈົ້າຊິຕົວະຂ້ອຍລົ້ມ ລົງຕົມເກືອກຝຸ່ນລ້າແລ້ວ
ຕົວະຂ້ອຍນີ້ ເປັນພຣາງ ມາແລ້ວແມ່ນບໍ່ເອົາ

125.ຍ ຂ້ອຍນີ້ເອີຍ ບໍ່ໄດ້ຕົວະເຈົ້າໄປເລາະຫ້ວຍ
ຊິສານກວຍຕາແຫຼວຫ່າງນີ້ມາ
ຂ້ອຍນີ້ມາ ບໍ່ໄດ້ຕົວະໃຫ້ເຈົ້າໄປຮ້າງຊູ້ ມາແລ້ວວ່າບໍ່ເອົາ

126.ຊ ເຈົ້າແມ່ຄຸນເອີຍສັງຊິກຽງບໍ່ກຽງ ກ້ຽງບ່ອນຕາເຕັມຊຸ້ນເດ
ຕັ້ງວ່າມີຜົວແພງ ກອດຜ້າຝານຳເຈົ້າ

127.ຍ ຂ້ອຍນີ້ເອີຍ ມາບໍ່ມີຊິໃດແລ້ວ ບໍ່ທາງຈິຄຶດຕໍ່ຊິໃດມາ
ຄຶດຕໍ່ ນາດຖະເຈົ້າ ພາຍພຸ້ມພູ້ດຽວ

128.ຊ ນ້ອງທີ່ຮັກ ແພງຂວັນເອີຍ ດາຊິເອົາຈີນໄດ້
................ ຄວາມປາກເວົ້າຍ້ອມ
ຕາຍລ້າຊ້ຳບໍ່ເປັນ

129.ຍ ຢ່າໄດ້ເອົາຫ້ອນ ອື່ຍງເກວາດບໍ່ຄ່ອງ ນີ້ມາ
ເອົາອື່ນນ້ອງໄປຮອດແລ້ວ ເຮືອນເຈົ້າມູນທະລາຍ

130.ຊ ຂ້ອຍນີ້ມາ ດາຊິເອົາຈົນໄດ້ ໄປເຮືອນຕ້ອນອື່ແມ່ຂ້ອຍມາ
ອື່ແມ່ມາແລ່ນຕ້ອນ ຊິບາຍເຈົ້າເຂົ້າໃສ່ມີ

131.ຍ ເມື່ອຈິໂຕນ ເມື່ອຈິໂຍນນຳເຈົ້າ ກ່າກົວເກງຢ້ານແມ່ຍ່ານມາ
ແມ່ຍ່ານັ້ນເຮີຍ ມາບໍ່ເອີ່ນລູກໃພ້ ອາຍໜ້າບ່າດຕ່າວຄືນ

| | | |
|---|---|---|
| 132. ຊ | ລົງເຮືອນມາ ແມ້ນຂ້ອຍສັ່ງໃຫ້ໄປຫາຊ້າງ | |
| | | ນຳມາຮອດແມ່ຍ່າ ແທ້ໄດ |
| | ໄດ້ນ້ອງໄປຮອດແລ້ວ | ຍ່າພາເຂົ້າສູ່ຫົ້ນອນ |
| 133. ຍ | ຢ່າໄດ້ເອົາໄປຫ້ອນ | ລາຍມື້ນ້ອງບໍ່ຊ່າງສັງນາ |
| | ແມ່ເຈົ້າເຮີຍກາງຫູກໄວ້ | ໄປຊ້ຳເລົ່າບໍ່ເປັນ |
| 134. ຊ | ເປັນຈັ່ງໃດ ດາຊິເອົາຈົ່ນໄດ້ | ຊິບາຍຈັບຜູກເອົາແລ້ວ |
| | ມີເບື້ອງຊ້າຍ | ຈັບມີດດ້າມງາ |
| | ມີເບື້ອງຂວາຈັບມີດດ້າມແກ້ວ | ຊິບາຍເຈົ້າເຂົ້າຮ່ວມຮຽງ |
| 135. ຍ | ເມື່ອຈິໄປນຳເຈົ້າ | ເມັຽເຜີ້ນນົມເອີຍນຸ່ງສິ້ນສົ້ວ |
| | ສົ້ວນຄຳມາລຽບລ່ຳຢູ່ນາ | ເມັຽເຜີ້ນນົມເອີຍ |
| | ນຸ່ງສິ້ນແຕ້ມ | ຫົວແຍ້ມຕໍ່ພີຊາຍ |
| 136. ຊ | ຊູ້ກ່າດຽວແມ່ນເຈົ້າ | ເມັຽກະດຽວແມ່ນເຈົ້າ |
| | ອີສົງໄສໃສ່ຜູ້ອື່ນ | ຈັ່ງໃດເດ |
| | ຊູ້ກ່າເຈົ້າເມັຽກ່າເຈົ້າ | ຊິໄປຖີ້ມໃສ່ຜູ້ໃດ |
| 137. ຍ | ຖ້າອ້າຍເວົ້າຈັ່ງຊັ້ນ ນ້ອງກໍ່ສາທຸຫ້ອນ | ຢ້ານບໍ່ແຈບກ່າໃຈເພີ້ນນາ |
| | ຢ້ານແຕ່ມີຮູ້ຊິ | ບຸນລົ້ງຫາງກ້ອງ |
| 138. ຊ | ເມັຽອ້າຍນັ້ນ ອ້າຍໄດ້ປະລະຖິ້ມ | ພາຍຫຼັງຊາດກ່ອນພຸ້ນແລ້ວ |
| | ມີແຕ່ເຈົ້າແລະຂ້ອຍ | ຊິຫມາຍສາງຕໍ່ກັນ ແລນາ |
| 139. ຊ | ເປັນແນວໃດດາຊິເອົາໃຫ້ໄດ້ | ເປັນຊູ້ມື່ງເມັຽແພງຂ້ອຍ |
| | ດາຊິເອົາເປັນເມັຽຂວັນ | ສືບຕໍ່ໄປເມື່ອຫນ້າ |
| 140. ຍ | ຂ້ອຍນີ້ເອີຍ | ກໍເວົ້າດັ່ງດຽວກັບເຈົ້າ ນັ້ນແລ້ວ |
| | ຂ້ອຍກໍ່ຕັ້ງຕໍ່ເຈົ້າ | ສະເຫມີຕໍ່ຕັ້ງຕົ້ນມາ |
| | ຂ້ອຍກໍ່ຕັ້ງຕໍ່ເຈົ້າ | ສະເຫມີເພື່ອງຕໍ່ຮັງ |

141.ຊ ຂ້ອຍນ໊ມາ ໄດ້ໄປຖາມຫມົດແລ້ວ ລູງຕາກໍ້ພ້ອມພໍ່ ແຫ້ໄດ

ອັນວ່າພ້ອມພໍ່ແລ້ວ ເອົາເຈົ້າເຂົ້າຄູ່ຄອງ

142.ຍ ເຈົ້ານ໊ມເຮີຍ ເວົ້າຍອມໆ ຫນີໄປນອນຄືນລະບ່ອນ ລະຕິ່ນ

ຂ້ອຍນ໊ມາກະດຽວວ່ານອນຂອກຂ້າງ

ຄວາຕຸ້ມແມ່ນຜ້າຟາ

143.ຊ ຂ້ອຍນ໊ມາ ດາຊິຫມາຍສືບສ້າງ ເຮືອນຊານໃຫ້ຫຼັງໃຫຍ່ ແຫ້ເດ

ດາຊິຫມາຍສືບສ້າງ ໃຈຂ້ອຍສ່ວນປະສົງ

144.ຍ ຂ້ອຍວ່າດັ່ງດຽວກັບເຈົ້ານ໊ມແລ້ວ ຂ້ອຍຫມາຍໄປສ້າງ

ເຮືອນຫລວງຫຼັງໃຫຍ່ຢູ່

ນ້ອງເອີຍ ຂ້ອຍນ໊ມາຕົກຕ່ຳຄອຍ ເຮືອນນ້ອຍຕູບຕອງ

145.ຊ ແນວໃດກ່າຢ່າ ດາຊິເອົາໄປສ້າງ ນ້ຳນອງມາດົນສວຍ ແຫ້ນາ

ດາຊິເອົາເປັນເມັຽແພງ ຮ່ວມຊື່ນອນນຳນ້ອງ

146.ຍ ອັນວ່າເຈົ້າມັກແລ້ວ ຂໍໃຫ້ເຈົ້າໄປເວົ້ານຳພໍ່ແມ່ລູງຕາ

ມາຈິຖອນຄ່າໃຫ້ ຊ້າງສີ່ຄວາຍສາມຜູ້ນມາ

ລູງຕານ໊ມາຈິຮອນພາລົງ ຊ້າງສາມຄວາຍເກົ້າ

147.ຊ ຂ້ອຍນ໊ມາ ທຸກຍາກໄຮ້ ຫັຽງຄາດຄ່າລາຄາແພງ ແຫ້ເດ

ຂ້ອຍໄດ້ຖາມໄປແລ້ວ ລູງຕາເພີນຜູ້ໃຫຍ່

ວ່າຊ້າງສາມຄວາຍສີ່ເອົາເນີ ບາດວ່າຂ້ອຍນ໊ມາສັງມາເປັນ ຊ້າງ

ສາມຄວາຍສີ່

148.ຊ ຂໍໃຫ້ເຈົ້າເວົ້ານຳຖ້ອນ ລູງຕາພໍ່ແມ່

ຂໍແຕ່ເງິນຫ້າຮ້ອຍ ເອົາໄດ້ບໍ່ຫຸ້ນຫວງ

149.ຍ ຂ້ອຍວ່າ ເຫຼືອແຮງ ແຕ່ລາວປອງເອົາເຈົ້າ

ຄອງຫມົດມູນພໍ່ແມ່ແລ້ວ ແອບຟາສິບສອງ

ແມ່ລາວກໍຂາຍຈຳເພີນແລ້ະ ຊິຂາຍລູກຕົນນຳບໍ່ວ່າຕິ

150.ຊ ຂ້ອຍຂໍໂອນເອົາທອນ ຂໍຈຳເງິນແສນໝື່ນໄດ້ບໍ່

ຣິດດອງສອງຊັ້ນນັ້ນ ໄວ້ແກ່ເຈົ້າ ທາງພີ້ຣບປະກັນ

151.ຍ ໜ່າຍເດຄວາມປາກເຈົ້າມາບໍເກິີ້ງລົມ

ຈິພ້ານອງຂ້ອຍເກື່ອນລົງຫົວຊັ້ນເດ

ມັນຫາກເປັນໂລເລ ສຽບກະຕໍຊິຕາຍຊ້ຳ

152.ຊ ລູງຕາເອີຍ ຫັຽງບໍ່ມາພ້ອມພ່ຳຂ້ອຍ

ຈິເອົາຊ້າງສາມຄວາຍສີ່ແທ້ບໍ

ຂ້ອຍມີ້ນາ ແນວຊິຕົກລົງນຳ ຊ້າງສາມຄວາຍເກົ້າ

153.ຍ ຂ້ອຍບໍໄດ້ຖາມເຈົ້າແລ້ວ ລູງຕາກໍພ້ອມພ່ຳທຸກຄົນແລ້ວ

ຖ້າວ່າລູງຕາໃດ ມາບໍ່ພ້ອມ ຈິເອົາງ້າວຄ່ອນລົງ

154.ຊ ຂ້ອຍຄິດວ່າລູງຕາເຮົາທັງສອງກ້ຳ ລ້ວນພ້ອມພ່ຳເຫັນດີ ແທ້ນາ

ຂໍເອົາແຕ່ຄວາຍໂຕດຽວ ເຮັດຄອງຂອງໝັ້ນ

155.ຍ ຂ້ອຍວ່າໃຈປະສົງແລ້ວ ເປັນຫຽງກໍຕາມຢ່າມັນນາ

ຜ້າປົກຫົວເຂົ້າສູ່ຊອນ ຕາຍແລ້ວກໍ່າບແໜງ

156.ຊ ເຈົ້ານີ້ມາເວົ້າຍອນໆ ໜີໄປນອນຄົນລະບ່ອນເຊັນເດ

ຂ້ອຍມີ້ນາເວົ້າຈັ້ນໆ ທາງເຈົ້າພັດເລື່າມາຍ

157.ຍ ເຮົານີ້ເຮີຍ ມັກກັນແລ້ວເຮົາກໍເອົາກັນທອນ

ຊິເອົາກັນຢູ່ກາງປ່ານັ້ນທ້ອນ

ກົກໄມ້ໃຫ່ຍເປັນລູງຕາໝາກສີດາເປັນຜີ້ນອງ

ສາວຝ້າຍຜູກແຂນ

158.ຊ ເຮັດແນວໃດເດັຍງຈະໄດ້ຮ່ວມຊ້ອນ ເຈົ້ານອງອອນລາຄາແພງ ແທ້ນາ

ອ້າຍຜູ້ທຸກສົງມາຊຸກປັນຍາ ສ່ວນຊິຫາບໍ່ມີໄດ້

159.ຍ ມັກກັນແລ້ວ ເອົາກໍເອົາກັນທ້ອນ ບໍ່ກິນດອງກໍແລ້ວຢ່າມັ້ນເຢີ

ໃຫ້ແມ້ນນ້ອງຂ້າໄກ້ນອຍ ໃນປີ່ສູ້ອ້ວນ

160. ຊ ອ້າຍຄິດວ່າຄວາມຮັກຄວາມມັກ ມີແຕ່ສອງເຮົານັ້ນ
ລຸງຕາບໍ່ພ້ອມພໍ່ ແທ້ໄດ ມີນຕາມາເປັນເຂີຍ
ມາບໍ່ໄດ້ຮ່ວມສ້າງ ຄົງຈິຮ້າງປ່າກັນ

161. ຍ ນ້ອງນໍ້ເຮີຍ ກໍຖາມເຫມິດແລ້ວ ລຸງຕາກໍ່ພ້ອມພໍ່ເຫມິດແລ້ວ
ຍັງແຕ່ສອງພະແກ້ວ ຍັງພ້ອມພໍ່ກັນ

162. ຊ ຂ້ອຍຄິດວ່າ ສອງເຮົາຕົກລົງກັນຍັງແຕ່ສິ້ນສົມສ້າງ
ເງິນຝາກຈັກແສນຊິໄດ້ບໍ່
ຫຼືຫາກວ່າຄອງມັນມີ ທໍ່ໃດກັນບ້າງ

163. ຍ ຄະແນນແຕ່ເຈົ້າຢາກໄດ້ ບໍ່ໃຫ້ຍາກຊາສັ່ງມາ
ຄະແນນແຕ່ລົງຄວາມມາ ຈິໂທບຄົວໄປພ້ອມ

164. ຊ ອ້າຍຄິດວ່າສອງເຮົາເອົາກັນແລ້ວ ລຸງຕາບໍ່ພ້ອມພໍ່ບໍ່ເປັນແລ້ວ
ຮີດບໍ່ແປງແຫນງບໍ່ເວົ້າ ຕົວເຈົ້າຈະລາໂສ່ມ

165. ຍ ນັບແຕ່ລຸງຕາຂ້ອຍ ປິດຕາພ້ອມພໍ່ເຫມິດມາ
ນັບແຕ່ເຈົ້າພະແກ້ວ ຈາເວົ້າວ່າຈະເອົາ

166. ຊ ຖ້າຈະລົງລາຍແທ້ ຂໍໃຫ້ນ້ອງໄຂຄວາມຕ້ານ
ລາຕາສີນແຕ່ງກ່ອນເນີ
ສີນແຕ່ງມາບໍ່ເວົ້າ ພະອວນເຈົ້າຫຼອກພີ່ຊາຍ

167. ຍ ນ້ອງຂ້ອຍນີ້ ຫາກເປັນກໍ່າພ້າ ເຈົ້າຈິຈາກາຢ້ານແກ່ມວ່າລີ
ແມ່ເຈົ້າສ່ອນສັ່ງໄວ້ ບໍ່ໃຫ້ແກ່ມພີ່ຊາຍ

168. ຊ ຂ້ອຍນັ້ນ ມາບໍ່ເຄີຍດອມຊ້ອນ ຍິງໃດລ້າເປົ່າ
ຫາກສີນຫ້າບໍ່ຕົກສີນຫົກບໍ່ແຕ່ງ ຫຼືຈະຂໍໄກ້ນອຍໃນປີ້ແມ່ນເອົາ

169. ຍ ຂ້ອຍນັ້ນ ແມ່ນໄດ້ຜິດພາດພັ້ງ ໃຫ້ເຈົ້າສັ່ງສອນເອົາແດ່ຫ້ອນ
ຢ່າໄດ້ເອົາໂກທາ ເບື່ອຂົມຄົ້ງວນ

170.ຊ ຂ້ອຍນມາ ວອນນຳເຈົ້າ ຂໍບໍ່ເອົາຊ້າງສາມຄວາຍສົມມາ
ຂໍເປັນເງິນສົດຂໍທັງໝົດຫ້າຮ້ອຍ ພະອວນອ້າຍຊິແຕ່ງເອົາ

171.ຍ ຂ້ອຍນມາ ຢາກຂາຍນາມາບົມຜູ້ຊ
ຈົ່ງໄດ້ພ່ອນ(ຈົ່)ເຣເທາະຢູ່ມາ
ຂ້ອຍນມາປຸດປ່ອນຂາຍໝ່ວຍບ ຊ້າວຄາບໍ່ຕໍ່ໂອມ

172.ຊ ເອົານມາ ຫາກວ່າຕົກລົງເອົາແລ້ວ
ລຸງຕາບໍ່ຮ້າຍຄ່າສັ່ງບໍ່
ຫາກເຖົ້າແກ່ຕົກລົງຈ່າ ຫາລຸງຕາຕົກລົງເອົ້າ
ທໍ່ໃດເຫ້າອ້າຍບໍ່ຂຶນ

173.ຍ ມັກກໍເອົາ ສາທ້ອນ ບໍ່ກິນຄອງແລ້ວກໍ່ຄອງກັນແລ້ວ
ອັ່ນວ່າຕົນແຕ່ເຊົ້າ ກໍເຊິນເຖົ້າຜູກແຂນ

174.ຊ ວ່າບຸນເຮີຍ ລັ້ນນ້ອງເວົ້າຊະແລ້ວ
ຂ້ອຍກໍ່ຂໍຍົມສົບນວ
ຂ້ອຍຂໍແຕ່ເຈົ້າຢ່າໄດ້ຫຼັບຫຼີກຫຼົ້ນ ຂໍໃຫ້ເປັນຄວາມຈິງ
ຄວາມບໍ່ຈິງເຈົ້າຢ່າກ່າວມາເນີ

175.ຍ ນ້ອງນມາ ໄດ້ວ່າໃຈປະສົງແລ້ວ ບໍ່ຫັວງເປັນປາງເປົ່າແຫ້ແລ້ວ
ຫັວງຈິເຂົ້າຫົ່ມກ້ວາງ ບໍ່ວອນໃຫ້ຕາກຝົນ

176.ຊ ອ້າຍນມາ ດາຫມາຍເຂົ້າ (ສີ) ພາຂັວນປ້ອນໄຂ່ໝ່ວຍພູ້ນແລ້ວ
ມີເບອງຂວາປ້ອນໄຂ່ຫາວ ເບອງຊ້າຍປ້ອນໄຂ່ນາງ

177.ຍ ອົກສະເທືນທາມ ຊິກິນດອງມ 14 ພຸ້ນມາ
ມີພໍ່ແມ່ເຖົ້າແກ່ມານັ່ງລ້ອມ ບ້າຍຝ້າຍຜູກແຂນ

178.ຊ ຫາກນ້ອງຄອງທາມ ຫ້ຽງໄປເອົາມ 14 ພຸ້ນມາ
ຫັຽງບໍ່ຫາມຸດງ ສູ່ຂວັນເໝຫມາ

179.ຍ ເພີ່ນຫາກຫ້າມໃຫ້ ເດືອນ 7 ຖືກມື້ 14 ນັ້ນນາ
ບໍ່ໃຫ້ຜິດສັນຍາ ໃຫ້ແນ່ນອນຕາມນັ້ນ

180.ຊ ຂ້ອຍຄິດວ່າໝັ້ນໝັ້ນນາຫ້າມເດືອນ 7 ຂື້ນ
ຈະເອົາເປັນແກ່ວໄດ້ແລ້ວ
ຮີດບູຮານເພີ່ນບໍ່ໄດ້ເອົາເດືອນ7 ສູ້ຂອນເມືອໜ້າ

181.ຍ ໄດ້ວ່າໃຈປະສົງແລ້ວ ຈັກນັດຂອງມລ້າງວ່າງກໍ່ຕາມທ້ອນ
ພໍ່ແມ່ລູງຕາຫາກມາພ້ຳພ້ອມ ເອົາໄດ້ແມ່ນແນ່ນອນ

182.ຊ ອ້າຍຄິດວ່າ ບູຮານເຖົ້າແກ່ເພີ່ນວ່າເອົາກັນຜົວເມັຍສ້າງ
ເມືອງສະຫວັນບ່ອນເກີດແຫ້ໄດ
ບໍ່ເກີດຢູ່ກັບເຈົ້າ ເມືອສາງບ່ອນສະຫວັນ ພຸ້ນນາ

183.ຍ ໂອນໍ ທະ ແນມ ທໍ່ໄດ້ອາຍທ້ອນ ແສນທຸກຍາກບໍ່ແຫນງຢູ່ມາ
ທະແນມທໍ່ໄດ້ອາຍແລ້ວກິນຂັ້ນຕາງວາ
ກໍ່ບໍ່ຫນາແຫນງຊ້ຳ

184.ຊ ອ້າຍຄິດວ່າຕົກລົງເຂົ້າ ໃຫ້ໄດ້ເຂົ້າຮ່ວມວົງແຫວນເຈົ້າແລ້ວ
ຄາໃຫ້ຮ່ວມວົງແຫວນຄຳ ສູບົມຈິ້ມກອຍ

185.ຍ ໂອນໍ ສະຕາເປັນຂອງນອງ ສາຍທອງແດງຊິຫັກແຊກເອົາມາ
ຢ້ານແຕ່ແມ່ນຂອງແຂກຄ້າ ຊາວບ້ານອື່ນໄກ

186.ຊ ອ້າຍນັ້ນນາ ຄາຊິຕົກໄປເຂົ້າ ບາຖາມືໃນຝ່າເຈົ້າແລ້ວ
ຄາຊິເປັນລ້ອຍຊ້ອຍ ຂອງເຈົ້າຜູ້ດຽວ ນັ້ນນາ

187.ຍ ທະແນມທໍ່ເຈົ້າະນັ້ນນາຕົກມາເຂົ້າ ພາຂ້ອນຊິ່ມໄຂເອົາທ້ອນ
ເຈົ້າຂະໜ່ອມນັ້ນນາມາບໍ່ຄຶດຫຼົກກ້ວນ
ກໍ່ເອົາແລ້ວຕັ້ງແຕ່ດົນ

188.ຊ ອ້າຍຊິຕົກໄປເຂົ້າ ໃຫ້ໄດ້ຮ່ວມຕຽງນອນ ແທ້ໄດ
ຄາຊິເປັນຜົວແພງ ເຂົ້າຮ່ວມຮຽງນຳເຈົ້າ

247/VII
ຫ້າມຈຳໜ່າຍ

189. ຍ ໂອໍ ເສັຽແຮງນ້ອງນົເວົ້າຍ້ອນໆ ໜີໄປນອນຄືນລະບ່ອນບໍເປັນຕິ
ນ້ອງນົເວົ້າຈັນງ ຫັ້ນເຂົ້າບ່ອນຊິເອົາ

190. ຊ ອ້າຍນົມາ ຄາຊິເວົ້າຈັນງ ໄດ້ຮ່ວມຮຽງໝອນເຈົ້ານາ
ຄາຊິເປັນຜົວແພງ ຮ່ວມຮຽງນຳເຈົ້າ

191. ຍ ເຊີນເຍີ ເຊີນເຈົ້າຕົກມາເຂົ້າ ໃຫ້ໄດ້ຮ່ວມຮຽງໝອນນັມມາ
ຂໍໃຫ້ໄດ້ຫົວຮຽງໝອນ ກ່ອມນອນຂໍນ້ອງ

192. ຊ ຄາຊິຕົກໄປເຂົ້າ ສ້າງສະນອນຮ່ວມບ່ອນເຈົ້ານາ
ມີເບື້ອງຊ້າຍຈັບຜ້າຟ້າ ມີເບື້ອງຂວາຈັບແກ້ມ
ຫົວແຍ້ມຕໍ່ກັນ

193. ຍ ຂ້ອຍນົມາ ຊອກກິນມາບໍເປັນຕາໄດ້
ຄືນໄປເຮືອນລູກສີດ່າເອົາມາ
ມາບໍໄດ້ພໍເຖົ້າ ໄປຕ້ອນລູກຫີດ

194. ຊ ຂ້ອຍນົມາ ຂານເປັນພໍເຖົ້າ ສິໄປເຮືອນໃຫ້ລູກເບິ່ງ ກ່ອນມາ
ຢ້ານແຕ່ພໍເຖົ້ານ້ອຍ ໄປແລ້ວລູກບໍ່ແຍງ

195. ຍ ເຊີນເຍີ ເຊີນເຈົ້າໄປນຳຫ້ອນ ບໍກົວເກງຈັກແຍ່ງພີ່ຊາຍເຮີຍ
ນ້ອງສິແປງບ່ອນໄວ້ລ້ອງຄ້ອງ ຄ້ອງຖ້າບ່າວພີ່ຊາຍ

196. ຊ ລ່າງ ຄັນວ່າເຮົາໄດ້ກັນແລ້ວ ເຮົາພາກັນສ້າງ
ຖຽງໄຮ່ແກມໝູ່ກາ ຖຽງນາແກມໝູ່ໄກ່ກ່ອນເນີ
ເຮົາໄດ້ກັນແລ້ວພາກັນສ້າງ ດິນຕ່ຳປູກເຂົ້າສາລີບ່ອນດິນດີປູກມັນ
ເຂົ້າກໍ່ກິນແຕ່ນິກິນແຕ່ໝາກຈອຍ ນຳເຈົ້າພໍ່ນາເຈົ້າເອີຍ

197. ຊ ລ່າງຄັນວ່າເຮົາໄດ້ກັນແລ້ວ ຂ້ອຍສິພາເຈົ້າສ້າງ
ສິໄປພາເຮັດໄຮ່ເຈົ້າແລ້ວ ບ່ອນດິນຕ່ຳໃສ່ເຂົ້າສາລີ
ບ່ອນດິນດີໃສ່ເຂົ້າກ່ຳແທ້ແລ້ວ ບາດວ່າສຸກ່ອນແລ້ວໄປຕ້ອນອີ່ແມ່ເຮົາ

198. ຍ ຂ້ອຍນັ້ນມາກເວົ້າເຖິງເຣື່ອງເຈົ້ານັ້ນແລ້ວ ເຮົາໄດ້ກັນແລ້ວ
ເຮົາຄ່ອຍພາກັນສ້າງ ສວນໝາກແຕງທາງທ່າ
ເຮົາຄ່ອຍເກັບໃສ່ຊານ້ອຍໆ ໄປຕ້ອນແມ່ຍ່າເຮົາ

199. ຊ ໂອ໋ ຕາໄຫຼເອີຍ ຄັນເຮົາໄດ້ກັນແລ້ວ
ຂ້ອຍຄາສີພາໄປຄ້າ ໄດ້ເງິນໝື່ນມາແຖມ
ເງິນແສນມາຕື່ມແທ້ນໍ ຄາສີພາກັນສືບສ້າງ
ເຮືອນຊານໃຫ້ມັ່ນຮຸ່ງໜໍເຈົ້າບ່າວ ມີລູກອ່ອນນ້ອຍ
ຍັງສິໄດ້ສືບມູນແທ້ໄດ

200. ຍ ເຮົານີ້ເອີຍ ໄດ້ກັນແລ້ວເຮົາຄ່ອຍພາກັນສ້າງ
ມາສ້ວນຮົ້ວໄຮ່ໜໍ
ເຮົານັ້ນໍ ຢ່າໄດ້ຢູ່ລ້າໆ ເມື່ອໜ້າບໍ່ຮຸ່ງເຮືອງ

201. ຊ ເຮົານີ້ມາ ເຮົາມາພາກັນສ້າງ ມາສ້ວນຮົ້ວໄຮ່ດີແລ້ວ
ຂ້ອຍຄາສີພາເຈົ້າສ້າງ ມີງົວຄວາຍໃຫ້ເຕັມແລ້ງແທ້ເນີ
ໝູໝາກາງບ້ານ ໃຫ້ໄດ້ທໍ່ກັນ

202. ຊ ຮັກກັນພັກກັນແລ້ວ ຂ້ອຍຊິໄດ້ລາຈາກເຈົ້າ
ກອງສີເອີຍ ຢ່າໝອງໝື່ນ ແດ່ເນີ
ລາຈາກສີບົງແພງ ສີຕ່າວຄືນເມືອບ້ານ

203. ຍ ອ້າຍເອີຍ ບຸນບໍ່ຮອດກັນແລ້ວເຮົາຄ່ອຍເຊົາກັນທ້ອນ
ສີເອົາກັນເປັນນ້ອງພີ່ໜໍ
ບຸນບໍ່ຮອດຍອດບໍ່ກຽວ ແສນສີຝັນບໍ່ເຫຼືອມາຍ

204. ຊ ຊາດນີ້ມາ ຖ້າບໍ່ໄດ້ເຈົ້າແລ້ວ ສິຂໍເປັນຄົນຈູງຄວາຍລອດຕະລ່າງເຈົ້າເນີ
ອ້າຍນີ້ມາຈະຂໍເປັນຂ້ອຍຈ້າງ ເສັຍຫັ້ນຢູ່ສ່ວນເຈົ້າເນີ

205. ຍ ເປັນແຕ່ເວນໃດເດ ທີ່ເຮົາມາບໍ່ເຫັນກ່ອນກັນນາ
ແມ່ເຈົ້າເອີຍປູກໝາກພ້າວຕັ້ງຕົນ ປາຍບໍ່ນ້າວໃສ່ກັນ

206. ຊ ໂອນໍ ອັນວ່າແມ່ນ້ອງປູກດອກຫ້ອມ  ຫວນສິຫອມຊ້ຳພົດນ່າຍກັນ ແລ້ວ
ແມ່ເຈົ້າປູກດອກຫ້ວາ  ວາໄວ້ບໍ່ໃຫ້ເອົາ

207. ຊ ຄັນທະວ່າ ເຮົາບໍ່ໄດ້ກັນໃນຊາດນີ້  ຂ້ອຍສິບວດເປັນເນນກ່ອນແລ້ວ
ດາສິບວດເປັນລືສີ  ປູ່ນຳພະແກ້ວ

208. ຍ ເປັນແຕ່ກຳຊາດແລ້ວ ພວກເຮົາໄດ້ຫຼົບນີ້ກັນອຍ ອຶນລື່ນໃນມື້ນມາ
ເປັນແຕ່ວ່ອນກ່ອນກໍ  ນຳໄວ້ຊາດສິມາ

209. ຊ ເມື່ອບໍ່ໄດ້ກັນແລ້ວ ຂ້ອຍນມາດາສິເປັນທະຫານຊ່າງ
ສິໄປໄທດອນຟ້າລັ່ງກ່ອນແລ້ວ
ຟ້າລັ່ງມາບໍ່ເຂົ້ອ  ສິໂຕນຕັ້ນເອົາທະຫານ ແທນາ

210. ຊ ຄ່ອຍປູ່ດີຢ່ີຈ່ວງຈັ້ນຊ້າງ  ກາງເມືອງຍອດເກົ່າງຢູ່ດີເນີ້
ຢ່າໃຫ້ເສັ້ງກົນສົ້ມ  ລືມຕອງສີບໍ່ຫອມເຈົ້າໄດ

211. ຍ ເຈົ້ານັ້ນເຮີຍ ໜີໄປແລ້ວຢ່າໃຫ້ເມີຍຫຼົ່ນໝາ
ມີທັງຕັ້ປ່ອຍດ່າສາເນີ
ໄດ້ຍິນຊ່າວ່າເມັ້ຽເຈົ້າເຮັ້ງອ້ອນ  ວອນເຈົ້າຈາກໄປ

212. ຊ ລ້າງຄັ້ນຂອຍໜີໄປແລ້ວ ຂ້ວນຂອຍໄປຫາເຈົ້າ
ໃຫ້ຮັກຣໍ່ຖະໜອມເອົາ
ໃຫ້ຮັກຣໍ່ຖະໜອມເອົາ  ເພິ່ງພານຳເຈົ້າ

213. ຍ ແກ້ອລ້າງ ອ້າຍໝ້າຮັກມາແຕ່ໄກ  ຄັນວ່າຂ້ອຍໄດ້ອ້າຍແລ້ວ
ຂ້ອຍສິຂອດໃສ່ແຈ່ງເສື້ອຫຼື  ໃສ່ແຈ່ງຜ້າບໍ່ພັ້ນບໍ່ໄດ້ໄຂ

214. ຊ ນ້ອງຮັກ ຄັນຂ້ວນຂອຍໄປແກ່ວເຈົ້າ  ໃຫ້ຮັກຣໍ່ຖະໜອມເອົາແດ່ເນີ
ຢ່າເອົາຂ້ວນຂອຍໄປໄຂວ່າຈາ  ຕໍ່ຜົວແພງຂອງເຈົ້າ

215. ຍ ຂ້ອຍກ່າຄິດເຈົ້ານັ້ນແລ້ວ ຢ່າໄດ້ເອົາຂ້ວນນ້ອງໜີໄປວອນເວົ້າຕໍ່ໝູ່ເຈົ້າເນີ
ອໍໃຫ້ຂອດແຈ່ງເສື້ອເຝືອແຈ່ງຜ້າ  ພັນມີຢ່າໄດ້ໄຂ

216. ຍ ຄ່ອຍປູ່ດີເຍີ ຂ້ອຍຈິໄດ້ລາງແລ້ວ    ລາທັ້ງຫມົດຊູເຊື້ອຍິງຊາຍສາວບ່າວແດ່ເນີ
ຈິໄດ້ລາພວກພີ່ນ້ອງ    ພາຍພ໌ຄ່ອຍປູ່ດີ

217. ຍ ເຊີນເຍີ ເຊີນເຈົ້າໄປເມືອຫນ້າ    ແນວຫຼັງຢ່າໄດ້ຮ່ວງນຳຫ້ອນ
ລູກເມັຍເຈົ້າເຝົ້າຢູ່ບ້ານ    ຕູ້ຂ້ອຍສິເບິ່ງແຍງ

218. ຊ ລ່າງຄັ້ນຂ້ອຍນໄປແນວຫນ້າ    ຕີສັດຕູໃຫ້ມັນມຸ່ນ ແຫ້ໄດ
ຄັ້ນຖ້າເຈົ້າຢູ່ບ້ານ    ຢ່າຫມາຍມ້າງແຕກກັນ

219. ຍ ເຊີນເຍີ ເຊີນໃຫ້ເຈົ້າໄປແນວຫນ້າ    ແນວຫຼັງຢ່າໄດ້ຮ່ວງນຳຫ້ອນ
ທະຫານພັນທະມິດເຕັມເມືອງ    ບໍ່ໃຫ້ເຄືອງໃຈເຈົ້າ

220. ຊ ຄັ້ນຖ້າຂ້ອຍໄປແນວຫນ້າ    ແນວຫຼັງປ້ອຍດ່າຢູ່ເດ
ໄປແນວຫນ້າຖືກປືນຍິງ    ເພາະວ່າຍິງສູ້ຫາ

221. ຍ ເຊີນເຍີ ເຊີນໃຫ້ເຈົ້າໄປແນວຫນ້າ    ແນວຫລັງຢ່າໄດ້ຫ່ວງ ນ້ຳຫອນ
ທັງບົ່ງແຈ້ວຜາມີນ ຂ້ອຍນເຝົ້າຢູ່ບ້ານ ສິເອົາໃຫ້ສິ່ງໄປ

222. ຊ ຄັ້ນຂ້ອຍໄປແນວຫນ້າ    ເມັຍແນວຫລັງຫລິ້ນຊູ້ຖ້າ
    ພາຍຫຼັງວ່ອງໆແຫ້ມາ
ຜົວຫາກຕາຍມອດມ້ວຍ    ເມັຍຖ້າສືບມູນ

223. ຍ ເຊີນເຍີ ເຊີນເຈົ້າໄປແນວຫນ້າ    ແນວຫຼັງຢ່າໄດ້ຫ່ວງນຳຫ້ອນ
ລູກເມັຍນັ້ນຕັ້ງແຕ່ບຸນກຸສົນ    ສິ່ງໄປຫາເຈົ້າ

224. ຊ ຄັ້ນອາຍໄປແນວຫນ້າ ຂານອາສາສູ້    ຕີສັດຕູໃຫ້ມັນພ່າຍ ແຫ້ໄດ
ບາດວ່າເມັຍຢູ່ບ້ານ    ມີຊູ້ຖ້າບໍ່ເປັນ

225. ຍ ເຊີນເຍີ ເຊີນໃຫ້ເຈົ້າໄປແນວຫນ້າ    ກໍແນວຫຼັງເຮີຍຢ່າໄດ້ຫ່ວງນຳຫ້ອນ
ລູກເມັຍເຈົ້າສິ່ງແຕ່ບຸນຄຸນນຳ    ໃຫ້ພ່ຳເພີງກໍເມືອຫນ້າ

226. ຊ ຂ້ອຍຄຶດວ່າຂ້ອຍ    ເປັນທະຫານໄປແນວຫນ້າ
ຕີສັດຕູໃຫ້ແຕກພ່າຍໄປມາ    ຢ້ານແຕ່ເມັຍຢູ່
ບ້ານລ້ຽງລູກນ້ອຍ    ງອງຖ້າບ່າວມາ

227.ຍ ໂອນໍ ເມັຽເຈົ້ານັມອາສາສູ້ ກໍນຳຜົວທຸກທິບທຊ່ວງເຣີຍ
ອໍໃຫ້ເຈົ້າຢ່າຢ້ານ ສັງແທ້ທີ່ໃຍ

228.ຍ ຄ່ອຍຢູ່ດີເປີ້ຊູ້ແຕ້ນອຍ ປະສົງຂອດຄຳແພງແທ້ນາ
ຂ້ອຍຈິໄດ້ລາຈາກສີສາຍຄໍ ຄ່ອຍຢູ່ດີດີເຈົ້າ

229.ຍ ລູກຫລານເຣີຍ ພວກແມ່ປ້ານມາຫາກໄດ້ຜິດູພາງດພົງ
ໃຫ້ເຈົ້າສັງສອນເອົາແດ່ທອນ
ອໍໃຫ້ກູ້ມາຜາຍ ໂຜດແມ່ນາຍຄາວນົ້

230.ຍ ຂ້ອຍຂໍອວຍພອນໃຫ້ ມີໃຈອັນລ້ຳຄ່າຊົ່ວງເຈົ້າເນີ
ພ້ອມພ່ຳຫລານອ່ອນນ້ອຍ ສະບາຍບ້າງຢູ່ກະເສີມ

231.ຍ ຫຼານເຣີຍ ບາດເຈົ້າໜີໄປແລ້ວອໍໃຫ້ເຈົ້ານັ້ນຍືນຍາວໜັ້ນ
ພັນວັດສາເຣີຍຢ່າລ່າແດ່ເນີ
ອໍໃຫ້ຍືນທ່ຽງເທົ້າ ມານ້ຣາຍຢ່າໄດ້ມີ

232.ຍ ເຈົ້ານັ້ນຫາກເຈົ້າມີໂຊກແລ້ວ ຊ້ຳພັດຕື່ມໃຫ້ມີໄຊແດ່ທອນ
ອໍໃຫ້ມີໄຊແຂງ ປານໝູ່ມານຫັ້ງຄາຍ

233.ຍ ລູກຫຼານເຣີຍ ອໍໃຫ້ຍືນຍາວໜັ້ນ ພັນປີຊົ່ງໄມ້ແກ່ນນັ້ນເນີ
ຢ່າໃຫ້ມີໂພຍໄພ ສົ່ງໃດມາຕ້ອງ

234.ຊ ໂອ້ວ່າແມ່ ເຈົ້າຜູ້ອວຍພອນໃຫ້ ອະນິສົງນຳສົ່ງຂ້ອຍເນີ
ອໍໃຫ້ບຸນມາທຽມທັ້ນ ສູ່ສະຫວັນຂອງຂ້ອຍ

235.ຍ ເຈົ້າຈິໄປແລ້ວ ອໍໃຫ້ເຈົ້າໄປດີທ້ອນ ໄປທາງກົກກ້ອຍນວນ
ເມືອທາງສ້ອນກວຍຕີບ ອໍໃຫ້ເຈົ້າເມືອຈີກຜ້າຜີນກວາງ
ໃຫ້ທົ່ມເມັຽ ທົ່ມເອົາເມັຽແລ້ວທົ່ມເອົາລູກ
ຄົນວ່າປະລູກໄວ້ ກໍເຫັງນຫ້ວານຈກິນ

236.ຊ ສາທູເນີ ອໍໃຫ້ດົ້ງອ້າງ ໃຫ້ໄດ້ດົ້ງຄວາມທ້ວງເຈົ້າເນີ
ອໍໃຫ້ໄດ້ທີ່ມຜ້ານ້ອຍ ນຳເຈົ້າທູກຍາມ

237.ຍ ອໍໃຫ້ບຸນຄຸ້ນແກ້ວ    ສາມປະການໃຫ້ມາຊ່ວຍເຈົ້າທ້ອນ
ພ້ອມທັງເທວະດາດ້ານດາວ    ມາພ້ອມສູ່ອຶ້ງ

238.ຊ ຄັນວ່າເຈົ້າຫາກໜີໄປແລ້ວ    ໃຫ້ຂ້ອຍຢູ່ຄອນໃຜນໍເດ
ໃຫ້ອ້າຍພໍ້ຍິງໃດ    ຈຶ່ງຈະລືມຕົວເຈົ້າ

239.ຊ ຄັນວ່າເຈົ້າໜີໄປແລ້ວ    ໃຫ້ຂ້ອຍປາກນຳໃຜນໍເດ
ໃຫ້ອ້າຍພີ່ປາກນຳຜີປ່າຊ້າ    ບໍ່ຄືເຈົ້າປາກນຳ

240.ຍ ແສນທຸກຂ້ອຍນໍມາ ແສນຈິໄປນອນຄ້ວາ ຕື່ນຂຶ້ນໄດກໍດາຍເປົ່າລະເມົາເຣີຍ
ແມ່ເຮົາມາປູກໝາກພ້າວ    ປາຍບໍ່ນ້າວໃສ່ກັນ

241.ຊ ໂອນໍ ໝາກແຕງເຣີຍ ສັງບໍ່ຄາວຫາຄັງ ເຫັນຊາຍງາມເຈົ້າລືມພີ່ແລນໍ
ສັງສິປະໃຫ້ພີ່ເປັນພຣາງ    ຄາຄ້າງດັ່ງໝາກແຕງນໍເດ

242.ຍ ໃຫ້ຂ້ອຍໄລລືມເຈົ້າ    ບໍ່ມີໄລລືມງ່າຍຊາຍເຣີຍ
ຈູມປວກຫາກເປັນຮູບກາ ຈູມປວກມາເປັນຮູບຊ້າງ
ປາງນັ້ນຍັງຈິໄລ

243.ຊ ຂ້ອຍກໍ່ວ່າດັ່ງຄຽວເຈົ້າ ໃຫ້ຂ້ອຍໄລລືມເຈົ້າ
ບໍ່ມີໄລລືມງ່າຍເສັຍແລ້ວ
ຕາບໃດພູອຽງຊຽງເວີນບໍ່ແຕກມ້າງ    ປາງນັ້ນແມ່ນບໍ່ລືມ

244.ຍ ຂ້ອຍກໍ່ວ່າດັ່ງຄຽວເຈົ້ານັ້ນແລ້ວ ໃຫ້ຂ້ອຍໄລລືມເຈົ້າ
ບໍ່ມີໄລລືມງ່າຍຊາຍເຣີຍ
ຕາບໃດເດຕ້ອງກ້ວຍຍັກເປັນໜາມໃບໝາກຂາມພໍຫໍ້ຊ້າງ
ປາງນັ້ນຈຶ່ງຄ່ອຍໄລ

245.ຊ ໃຫ້ຂ້ອຍໄລລືມເຈົ້າ    ບໍ່ມີໄລລືມງ່າຍ
ຫີນຢູ່ບົກຕົກໃສ່ນ້ຳ    ຟູຂຶ້ນຈຶ່ງຈະລືມ

246.ຍ ຊາດທີ່ຄຳຜູ້ຊາຍນໍ    ບໍ່ເປັນຕາສີເຜີງເຊືອໄດ້ມາ
ອັນວ່າຕົກໃສ່ນ້ຳ    ຟູຂຶ້ນດັ່ງສະໂນ

247. ຊ ອັນວ່າໃຈພູ້ຊາຍນັ້ນ ຕັ້ງທ່ຽງໝັ້ນ ບໍ່ໄຫວຫວື່ນໄປມາແທ້ໄດ
ຈິດພີ່ເປັນຄືນດຽວ ກ່ຽວເຂົ້ານານຳເຈົ້າ

248. ຍ ໃຫ້ຂອຍໄລລືມເຈົ້າ ບໍ່ມີໄລລືມງ່າຍພີ່ຊາຍເອີຍ
ຕາບໃດຟ້າບໍ່ຜ່າໄມ້ຈວງ ຫຼວງພະບາງບໍ່ແຕກມ້າງ
ປາງນັ້ນຂ້ອຍບໍ່ໄລ

249. ຍ ຄ່ອຍຢູ່ດີເຍີ ຊູ້ຕຳຕິດຊູ້ຕຳຕອງ ຊູ້ນອງມາແຕ່ນ້ອຍ
ສິຫາກຮຽນລືມນມາ
ຫົວບໍ່ທັນຮຽງໝອນ ບ່າວພີ່ຊາຍຫາກຈຳມ້າງ

250. ຍ ຄ່ອຍຢູ່ດີເຍີ ດອກຮັກພົ້ວ ກົ້ວແຕກບໍ່ທັນຊືມ ນເດ
ພໍແຕ່ໂອ້ວ່າຊືມຍາມດຽວ ຊ້ຳເລົ່າຫາຍໄປຈ້ອຍ

251. ຊ ໂອ້ວ່າດອກຮັກພົ້ວ ກົ້ວກິນບໍ່ທັນຊືມນເດ
ດອກຮັກເປັນເກສອນ ພີ່ຈະນຳໄປຊ້ອນ.



ທ່າປ່າເຝືອນ 1994 ທຸມພັນ



ຕະຫລາດນັດ 1996 ຖະໜົນເສັ້ນກາງ ວັດທາດ-ລາດແລງ ທຸມພັນ



ທ່າປ່າເຝືອນຊຸມປີ 1800



ຖະໜົນເສັ້ນກາງທີ່ລາດແລງ ຊຸມປີ 1800



ລິງຂ່ວງງັນ ຈາກຮູບແຕ້ມເມືອງນານ ຊຸມປີ 1890

24 / VII



ງັນວັດໃໝ່ ໂອກາດ ສິງພະບາງ 1996

ທຸມພັນ



ວົງພິນພາດ ຈາກຝາພະຫນັງວັດປ່າຮວກ ທຸມພັນ



ພິນພາດ ຝາພະຫນັງວັດດອນໂມ.( ຊຽງເງິນ ) ທຸມພັນ



Jeune fille Laotienne en promenade
d'après un dessin indigène.

ສາວລາວ ຊົມດອກ ຮູບແຕ້ມເມືອງນານຊຸມປີ 1890



ລາຍກອງທາງ ຮູບແຕ້ມ ຝາພະໜັງ ວັດດອນໂມ ທຸມພັນ



ສາວສະໜົມ ໃນວັງ ຮູບແຕ້ມ ຝາພະໜັງວັດປ່າຮວກ ທຸມພັນ



(12-13) ການຄົບງັນ - ຂອງເຖົ້າແກ່ ທຸມພັນ
ບ້ານຊຽງ - ເງິນ ປີ 1994



(12-13) ການຄົບງັນ - ຂອງເຖົ້າແກ່
ບ້ານຊຽງ - ເງິນ ປີ 1994

ທຸມພັນ



ແອ່ວສາວແບບບູຮານ ຮູບແຕ້ມຝາພະຫນັງ ວັດປ່າຮວກ ທຸມພັນ



ຂໍຂອດຮັກ ຮູບແຕ້ມ ຝາພະໜັງ ວັດປ່າຮວກ ທຸມພັນ



ວົງເສບຄອບຄົວບຸບຜາ ( ຖ່າຍທອດ-ສືບທອດ ) ທຸມພັນ



ຫລວງພະບາງ ປີ 1998 ທຸມພັນ

<u>ອ່ານຫນັງສືໂຈດກັນ.</u>

ຫວ່າງ : ລູງຊຽງພັນ 60 ປີ

ປ້າ ກັນຫາ 50 ປີ

ບ້ານ ນ້ຳງາ ແຂວງຫລວງພະບາງ ປີ 1990.

<u>ກະທູ້ເລື່ອງຈັກກະວານ.</u>

1.ຍິງ ໂອນໍ ອັນວ່າແກ້ວ 3 ປະການນີ້ ພາວັນນຳທຸກເຊົ້າຄ່ຳ
ມີທັງນົບນອບໄຫວ້ ທຽນໄຕ້ຢູ່ທຸກວັນ

2.ຊ ນ່ອນເຣີຍເຈົ້ານັ້ນນົບນອບໄຫວ້ ບູຊາທຸກເຊົ້າຄ່ຳສິ່ງໃດເດ
